# ຄະນະພົວພັນຕ່າງປະເທດສູນກາງພັກ

## Committee for External Relations of the Party Central Committee


**I.** ສະພາບການພົ້ນເດັ່ນຂອງພາກພື້ນ ແລະ ສາກົນ..........................................**ໜ້າ 01 - 06**

**II.** ການເຄື່ອນໄຫວວຽກງານຂອງການນຳພັກ ປະຊາຊົນ ປະຕິວັດລາວ……………….**ໜ້າ 07- 10**

**III.** ການເຄື່ອນໄຫວວຽກງານ ຂອງຄະນະນຳ ຄະນະພົວພັນຕ່າງປະເທດສູນກາງພັກ……..**ໜ້າ 11- 17**

**IV.** ການເຄື່ອນໄຫວວຽກງານ ຂອງອົງການຈັດຕັ້ງມະຫາຊົນ…………………………**ໜ້າ 17- 18**


ໃບຂ່າວຂອງຄະນະພົວພັນຕ່າງປະເທດສູນກາງພັກ

ປະຈຳເດືອນ **ກໍລະກົດ 2021**


**ສຳນັກງານຕັ້ງຢູ່ບ້ານ ສີວິໄລ, ເມືອງໄຊທານີ, ນະຄອນຫຼວງວຽງຈັນ ໂທລະສັບ 021 417470,**

**Fax 021 414043, Email: Ri.dept.la@Gmail.com, Website: www.cerccp.org.la**

`

# I. ສະພາບການພົ້ນເດັ່ນຂອງພາກພື້ນ ແລະ ສາກົນ

## 1. ສະພາບການພົ້ນເດັ່ນຢູ່ ສປປ ລາວ

ສະພາບການລະບາດຂອງພະຍາດໂຄວິດ - 19 ຢູ່ ສປປ ລາວ ໃນໄລຍະເດືອນ ກໍລະກົດ ນີ້, ຖ້າທຽບໃສ່ເດືອນມິຖຸນາຜ່ານມາ ການຕິດເຊື້ອພາຍໃນຊຸມຊົນ ມີທ່າອ່ຽງຫຼຸດລົງ, ສ່ວນໃຫຍ່ ແມ່ນກໍລະນີການຕິດເຊື້ອທີ່ນໍາເຂົ້າ ຈາກແຮງງານລາວ ທີ່ກັບມາຈາກປະເທດເພື່ອນບ້ານ. ຮອດວັນທີ 31 ກໍລະກົດ 2021, ສປປ ລາວ ມີຜູ້ຕິດເຊື້ອສະສົມທັງໝົດ 6299 ຄົນ, ເສຍຊີວິດ 7 ຄົນ, ກໍາລັງປິ່ນປົວ 2804 ຄົນ. ໃນຂະນະດຽວກັນ, ຄະນະສະເພາະກິດຕ້ານ ແລະ ສະກັດກັ້ນການແຜ່ລະບາດຂອງພະຍາດໂຄວິດ-19 ແລະ ກະຊວງສາທາລະນະສຸກ ໄດ້ເອົາໃຈໃສ່ຊຸກຍູ້ປະຊາຊົນລາວ ໃຫ້ໄປຮັບການສັກຢາວັກແຊງປ້ອງກັນພະຍາດດັ່ງກ່າວ ໃຫ້ຄົບ 2 ເຂັມ ເພື່ອສ້າງພູມຄຸ້ມກັນຕ້ານພະຍາດດັ່ງກ່າວ, ຮອດວັນທີ 31 ກໍລະກົດ 2021 ມີປະຊາຊົນ ທີ່ໄດ້ຮັບການສັກວັກແຊງ ເຂັມທີ 1 ຈໍານວນ 1,163,195 ຄົນ ແລະ ໄດ້ສັກຄົບ 2 ເຂັມ ຈໍານວນ 869,245 ຄົນ ແລະ ຈະສືບຕໍ່ຊຸກຍູ້ ໃຫ້ປະຊາຊົນ ໄດ້ສັກວັກແຊງ ຄົບ 2 ເຂັມ ຢ່າງໜ້ອຍ 50% ຂອງພົນລະເມືອງລາວທົ່ວປະເທດ ໃນທ້າຍປີ 2021 ນີ້.

## 2. ສະພາບການສາກົນ

### 1) ສະພາບການລະບາດຂອງເຊື້ອພະຍາດ ໂຄວິດ - 19 ໃນທົ່ວໂລກ

ໃນໄລຍະເດືອນ ກໍລະກົດ 2021, ພະຍາດໂຄວິດ-19 ໃນຫຼາຍປະເທດ ແລະ ຂົງເຂດທົ່ວໂລກ ຍັງສືບຕໍ່ເພີ່ມທະວີຂຶ້ນ, ບາງປະເທດ ໄດ້ກັບມາລະບາດຄືນໃໝ່ ທີ່ຮຸນແຮງກວ່າເກົ່າ ເຊັ່ນ ບັນດາປະເທດອາຊຽນ: ໄທ, ມຽນມາ, ຫວຽດນາມ, ອິນໂດເນເຊຍ, ມາເລເຊຍ. ສ່ວນ ປະເທດທີ່ເຄີຍລະບາດຢ່າງຮຸນແຮງ ເປັນຕົ້ນແມ່ນ ປະເທດອິນເດຍ ກໍເລີ່ມມີທ່າອ່ຽງຫຼຸດລົງເລັກໜ້ອຍ ແລະ ຫຼາຍປະເທດ ກໍໄດ້ໃຊ້ມາດຕະການປິດເມືອງ ແລະ ໃຫ້ຄວາມສໍາຄັນ ໃນການສັກວັກແຊງ ເພື່ອປ້ອງກັນການແຜ່ລະບາດຂອງພະຍາດດັ່ງກ່າວ ໄປໃນວົງກວ້າງກວ່າເກົ່າ ເຊັ່ນ: ປະຊາຊົນຈີນ ໄດ້ຮັບການສັກວັກແຊງທົ່ວປະເທດ, ສາມາດປ້ອງກັນການລະບາດພະຍາດດັ່ງກ່າວ. ສ່ວນ ສະຫະລັດອາເມລິກາ ໄດ້ໃຊ້ມາດຕະການບັງຄັບໃຫ້ປະຊາຊົນ ຕ້ອງສັກວັກແຊງ ຄົບ 2 ເຂັມ, ສໍາລັບຜູ້ບໍ່ປະສົງສັກວັກແຊງ ຕ້ອງໄດ້ໄປກວດຫາເຊື້ອໂຄວິດ ຢ່າງໜ້ອຍ 1 ຄັ້ງ ຕໍ່ອາທິດ. ຮອດວັນທີ 31 ກໍລະກົດ 2021, ທົ່ວໂລກ ມີຜູ້ຕິດເຊື້ອສະສົມທັງໝົດ 198,010,967 ຄົນ, ເສຍຊີວິດທັງໝົດ 4,224,124 ຄົນ ແລະ ປິ່ນປົວຫາຍດີທັງໝົດ 178,907,063 ຄົນ.

### 2) ສະພາບການໃນຂົງເຂດອາຊີ-ປາຊີຟິກ

ຂົງເຂດອາຊີ-ປາຊີຟິກ ຍັງສືບຕໍ່ເປັນຂົງເຂດທີ່ສໍາຄັນ ແລະ ເປັນຈຸດສຸມ ໃນການຍາດແຍ່ງອິດທິພົນ ຂອງບັນດາປະເທດໃຫຍ່. ສະພາບລວມ ຍັງສືບຕໍ່ປະເຊີນກັບສິ່ງທ້າທາຍຫຼາຍຢ່າງ ເປັນຕົ້ນແມ່ນການແຜ່ລະບາດ ຂອງເຊື້ອພະຍາດໂຄວິດ-19, ບັນຫາການເມືອງພາຍໃນ ຂອງບາງປະເທດ, ການແຂ່ງຂັນດ້ານເສດຖະກິດ-ການຄ້າ, ບັນຫາທະເລຈີນໃຕ້, ແຫຼມເກົາຫຼີ ຍັງສືບຕໍ່ ສິ່ງຜົນກະທົບ ຕໍ່ສະຖຽນລະພາບ ແລະ ຄວາມໝັ້ນຄົງ ຂອງພາກພື້ນ. ແນວໃດກໍດີ, ໃນວັນທີ 21 ກໍລະກົດ 2021, ເຈົ້າໜ້າທີ່ອາວຸໂສອາເມລິກາ, ຍີ່ປຸ່ນ ແລະ ສ. ເກົາຫຼີ ໄດ້ປະຊຸມພົບປະແລກປ່ຽນບັນຫາຕ່າງໆຮ່ວມກັນ ໂດຍເນັ້ນການຮ່ວມມືທີ່ແໜ້ນແຟ້ນກວ່າເກົ່າ ເພື່ອບັນລຸ ການປົດອາວຸດນິວເຄລຍຢ່າງສົມບູນ ໃນແຫຼມເກົາຫຼີ; ການຮັກສາສັນຕິພາບ ແລະ ຄວາມໝັ້ນຄົງ ໃນເຂດທະເລຈີນໃຕ້.

ລະຫວ່າງວັນທີ 26- 30 ກໍລະກົດ 2021, ທ່ານ Lloyd Austin, ລັດຖະມົນຕີປ້ອງກັນປະເທດ ສ. ອາເມລິກາ ໄດ້ເດີນທາງຢ້ຽມຢາມປະເທດ ສິງກະໂປ, ຫວຽດນາມ ແລະ ຟີລິປິນ, ເພື່ອຍົກສູງຄວາມສຳຄັນຂອງບັນດາປະເທດດັ່ງກ່າວ ໃນພາກພື້ນ, ໂດຍມີເປົ້າໝາຍໃຫ້ບັນດາປະເທດອາຊຽນ ປະກອບສ່ວນຢ່າງຕັ້ງໜ້າ ໃນໂຄງສ້າງຍຸດທະສາດອິນໂດ - ປາຊີຟິກ ທີ່ມີອາເມລິກາ ເປັນຜູ້ຊຸກຍູ້ຫຼັກ. ຂະນະດຽວກັນ, ໃນວັນທີ 22 ກໍລະກົດ 2021, ລັດຖະມົນຕີປ້ອງກັນປະເທດອັງກິດ ກໍໄດ້ຢ້ຽມຢາມ ແລະ ເຮັດວຽກ ກັບຄູ່ຮ່ວມຕຳແໜ່ງຂອງຫວຽດນາມ, ສອງຝ່າຍ ໄດ້ປຶກສາຫາລື ກ່ຽວກັບການແລກປ່ຽນຂໍ້ມູນຂ່າວສານດ້ານວຽກງານຄວາມສະຫງົບ, ການຮ່ວມມືດ້ານການທະຫານ, ບັນຫາທະເລຈີນໃຕ້ ແລະ ບັນຫາອື່ນໆ. ເຊິ່ງເປົ້າໝາຍຫຼັກ ກໍຄືການຮ່ວມກັນຈຳກັດອິດທິພົນຂອງຈີນ ໃນພາກພື້ນອາຊີ-ປາຊີຟິກ ໂດຍສະເພາະ ແມ່ນໃນຂົງເຂດທະເລຈີນໃຕ້.

ໃນວັນທີ 7 ກໍລະກົດ 2021, ທ່ານນາງ Wendy Sherman, ຮອງລັດຖະມົນຕີຕ່າງປະເທດ ອາເມລິກາ ໄດ້ຢ້ຽມຢາມ ແລະ ເຮັດວຽກຢູ່ ຈີນ ເຊິ່ງໄດ້ພົບປະກັບຄູ່ຮ່ວມຕຳແໜ່ງ ທ່ານ Xie Feng, ຮອງລັດຖະມົນຕີຕ່າງປະເທດຈີນ. ສອງຝ່າຍໄດ້ແລກປ່ຽນຄຳຄິດເຫັນຫຼາຍບັນຫາຮ່ວມກັນເປັນຕົ້ນແມ່ນ ການຮ່ວມມື, ການແກ້ໄຂບັນຫາການປ່ຽນແປງສະພາບດິນຟ້າອາກາດ, ບັນຫານິວເຄຼຍອີຣານ ແລະ ບັນຫາແຫຼມເກົາຫຼີ, ບັນຫາສິດທິມະນຸດໃນຊິນຈຽງ, ບັນຫາໄຕ້ຫວັນ ແລະ ທະເລຈີນໃຕ້. ຝ່າຍ ສປ ຈີນ ໄດ້ຮຽກຮ້ອງໃຫ້ ອາເມລິກາ ປັບແນວຄວາມຄິດທີ່ເປັນອັກຄະຕິຕໍ່ຈີນ, ແກ້ໄຂຂໍ້ຜິດພາດກ່ຽວກັບນະໂຍບາຍ ແລະ ຢຸດໃຊ້ມາດຕະການລົງໂທດຝ່າຍດຽວຕໍ່ກັບບຸກຄົນ, ນິຕິບຸກຄົນ ແລະ ນັກສຶກສາຂອງ ຈີນ ໃນ ອາເມລິກາ. ພ້ອມກັນນັ້ນ, ທ່ານ ຫວັງອີ້, ລັດຖະມົນຕີຕ່າງປະເທດຈີນ ຍັງໄດ້ຮຽກຮ້ອງໃຫ້ ອາເມລິກາ ປະຕິບັດ 03 ຂໍ້ທີ່ສຳຄັນໃນການຮັກສາສາຍພົວພັນ ຈີນ - ອາເມລິກາ ຄື: 1). ຢຸດຕິການກະທຳທີ່ເປັນການປະເຊີນໜ້າ, ໃສ່ຮ້າຍປ້າຍສີ ແລະ ແຊກແຊງລະບົບສັງຄົມນິຍົມຕາມສີສັນຂອງຈີນ; 2). ຢຸດຕິການພະຍາຍາມຂັດຂວາງການພັດທະນາຂອງ ຈີນ ລວມທັງການນຳໃຊ້ມາດຕະການລົງໂທດຝ່າຍດຽວ, ການເພີ່ມອັດຕາພາສີ, ການໃຊ້ອຳນາດສານ ແລະ ການສະກັດກັ້ນທາງດ້ານເຕັກໂນໂລຊີ; 3). ຢຸດຕິການແຊກແຊງອະທິປະໄຕ ແລະ ກິດຈະການພາຍໃນຂອງຈີນ ໂດຍສະເພາະຢູ່ຊິນຈຽງ, ຕິເບດ, ຮົງກົງ ແລະ ໄຕ້ຫວັນ.

ໃນວັນທີ 06/07/2021, ກອງປະຊຸມລັດຖະມົນຕີຕ່າງປະເທດອາຊຽນ-ລັດເຊຍ ຜ່ານວິດີໂອທາງໄກ ພາຍໃຕ້ການເປັນປະທານຮ່ວມ ຂອງ ທ່ານ ເຊຣເກ ລາວະຣົບ, ລັດຖະມົນຕີການຕ່າງປະເທດ ລັດເຊຍ ແລະ ທ່ານ ນາງ Retno Marsudi, ລັດຖະມົນຕີການຕ່າງປະເທດອິນໂດເນເຊຍ. ກອງປະຊຸມ ໄດ້ແລກປ່ຽນຄຳຄິດເຫັນ ແລະ ຕີລາຄາສູງ ຕໍ່ຜົນການຈັດຕັ້ງປະຕິບັດບັນດາໂຄງການ ແລະ ແຜນປະຕິບັດງານການຮ່ວມມືອາຊຽນ-ລັດເຊຍ ໃນໄລຍະຜ່ານມາ ແລະ ກຳນົດທິດທາງ ແຜນການໃນຕໍ່ໜ້າ ໃນຂົງເຂດການເມືອງ-ຄວາມໝັ້ນຄົງ, ເສດຖະກິດ, ວັດທະນະທຳ-ສັງຄົມ ແລະ ວຽກງານຕ້ານພະຍາດໂຄວິດ - 19. ພ້ອມກັນນັ້ນ, ກອງປະຊຸມ ຍັງໄດ້ແລກປ່ຽນຄຳຄິດຄຳເຫັນ ກ່ຽວກັບ ບັນຫາພາກພື້ນ ແລະ ສາກົນ ແລະ ການກະກຽມໃຫ້ແກ່ກອງປະຊຸມລັດຖະມົນຕີຕ່າງປະເທດ ອາຊຽນ-ລັດເຊຍ (PMC) ໃນຕົ້ນເດືອນສິງຫາ 2021 ແລະ ກອງປະຊຸມສຸດຍອດຜູ້ນຳອາຊຽນ-ລັດເຊຍ ຄັ້ງທີ 4 ທີ່ຈະຈັດຂຶ້ນ ໃນເດືອນ ຕຸລາ 2021. ໃນວັນທີ 07/07/2021, ທ່ານ ສະເຫຼີມໄຊ ກົມມະສິດ ໄດ້ຕ້ອນຮັບ ແລະ ປຶກສາຫາລື ກັບ ທ່ານ ເຊຣເກ ລາວະຣົບ ລັດຖະມົນຕີກະຊວງການຕ່າງປະເທດ ແຫ່ງ ສະຫະພັນລັດເຊຍ ໃນໂອກາດນຳພາຄະນະຜູ້ແທນມາຢ້ຽມຢາມ ເຮັດວຽກ ຢູ່ ສປປ ລາວ. ສອງຝ່າຍ ໄດ້ທົບທວນຄືນ ແລະ ຕີລາຄາສູງຕໍ່ການພົວພັນຮ່ວມມືໃນຂອບການຮ່ວມມືສອງຝ່າຍ ແລະ ຫຼາຍຝ່າຍ ໃນໄລຍະຜ່ານມາ ເພື່ອຮັດແໜ້ນ ແລະ ເສີມຂະຫຍາຍຢ່າງຕໍ່ເນື່ອງ ບົນພື້ນຖານຄວາມເຂົ້າອົກເຂົ້າໃຈ, ການຊ່ວຍເຫຼືອເຊິ່ງກັນ ແລະກັນ, ການພົວພັນມິດຕະພາບ ແລະ ການຮ່ວມມືອັນເປັນມູນເຊື້ອມາແຕ່ດົນນານລະຫວ່າງ ລາວ-ລັດເຊຍ.

**ຂໍ້ສັງເກດ** : ພາຍຫຼັງການສະເຫຼີມສະຫຼອງວັນສ້າງຕັ້ງພັກກອມມູນິດຈີນ ຄົບຮອບ 100 ປີ ແລະ ການພັດທະນາລົບລ້າງຄວາມທຸກຍາກ ຂອງ ສປ ຈີນ ໄດ້ຮັບຜົນສຳເລັດໃຫຍ່ຫຼວງ, ມີຫຼາຍພັກການເມືອງ, ຫຼາຍປະເທດທົ່ວໂລກ ໄດ້ສະໜັບສະໜູນບົດບາດ ຂອງ ສປ ຈີນ ນັບມື້ສູງຂຶ້ນ ໃນເວທີສາກົນ. ດັ່ງນັ້ນ, ການຢ້ຽມຢາມຂົງເຂດອາຊີຕາເວັນອອກສຽງໃຕ້ ແລະ ຢ້ຽມຢາມ ສປ ຈີນ ຂອງເຈົ້າໜ້າທີ່ອາວຸໂສອາເມລິກາ ແລະ ພັນທະມິດດັ່ງກ່າວ ແມ່ນຄວາມຈຳເປັນ ໃນການຊຸກຍູ້ນະໂຍບາຍ ຫັນສູ່ອາຊີ, ດຳເນີນຍຸດທະສາດອິນໂດ-ປາຊີຟິກ ຮ່ວມກັບພັນທະມິດ ເພື່ອຍັບຍັ້ງອິດທິພົນ ຂອງ ສປ ຈີນ ໃນພາກພື້ນ.

### 3) ສະພາບການໃນຂົງເຂດເອີລົບ-ອາເມລິກາ

ໃນໄລຍະເດືອນ ກໍລະກົດ 2021, ຂົງເຂດເອີລົບ-ອາເມລິກາ ມີຫຼາຍເຫດການເດັ່ນ ເປັນຕົ້ນແມ່ນ ເຫດການປະທ້ວງໃນກູບາ ຄັ້ງວັນທີ 11 ກໍລະກົດ 2021 ຜ່ານມາ ໂດຍມີປະຊາຊົນກູບາຫຼາຍພັນຄົນ ອອກມາເດີນຂະບວນປະທ້ວງລັດຖະບານ ເພື່ອສະແດງຄວາມບໍ່ພໍໃຈຕໍ່ລັດຖະບານ ໃນການແກ້ໄຂບັນຫາວິກິດການທາງດ້ານເສດຖະກິດ, ການຕ້ານພະຍາດໂຄວິດ-19 ແລະ ຮຽກຮ້ອງໃຫ້ລັດຖະບານຈັດການເລືອກຕັ້ງແບບອິດສະຫຼະ. ຂະນະດຽວກັນ ປະຊາຊົນຈຳນວນຫຼວງຫຼາຍ ທີ່ສະໜັບສະໜູນພັກກອມມູນິດກູບາ ກໍໄດ້ອອກມາເດີນຂະບວນປະທ້ວງເພື່ອເປັນການຕອບໂຕ້ກຸ່ມປະທ້ວງດັ່ງກ່າວ. ຕໍ່ກັບເຫດການດັ່ງກ່າວ ທ່ານ Miguel Diaz-Canel, ປະທານປະເທດ ສ. ກູບາ ໄດ້ອອກມາພົບປະກັບປະຊາຊົນ ແລະ ສື່ມວນຊົນ ໂດຍຮຽກຮ້ອງໃຫ້ປະຊາຊົນມີຄວາມສາມັກຄີ, ເຄົາລົບເຊິ່ງກັນ ແລະ ກັນ ແລະ ປະຕິບັດຕາມມາດຕະການປ້ອງກັນພະຍາດໂຄວິດ - 19. ທ່ານ Miguel Diaz- Canel ຢືນຢັນວ່າ ເຫດການປະທ້ວງດັ່ງກ່າວ ໄດ້ຮັບການສະໜັບສະໜູນຈາກພາຍນອກ, ຈຳນວນຜູ້ປະທ້ວງ ເປັນພຽງກຸ່ມຄົນຈຳນວນໜ້ອຍ ແລະ ບໍ່ສາມາດທຽບກັບປະຊາຊົນສ່ວນໃຫຍ່ ທີ່ໃຫ້ການສະໜັບສະໜູນ ແລະ ເຊື່ອໝັ້ນ ຕໍ່ການບໍລິຫານປະເທດ ຂອງລັດຖະບານກູບາ.

ບັນດາລັດຖະມົນຕີຕ່າງປະເທດ ສະຫະພາບເອີລົບ ໄດ້ມີການຕົກລົງຮ່ວມກັນ ໃນການເລີ່ມດຳເນີນແຜນການໂຄງລ່າງພື້ນຖານຂະໜາດໃຫຍ່ ເພື່ອພັດທະນາການເຊື່ອມຈອດລະຫວ່າງ ສະຫະພາບເອີລົບ ກັບ ບັນດາປະເທດອື່ນໆໃນໂລກ ຫຼື ເອີ້ນວ່າ "ການເຊື່ອມຈອດໂລກ ກັບສະຫະພາບເອີລົບ " ( A Gobally conneted Europe) ເຊິ່ງ ຈະເລີ່ມຈັດຕັ້ງປະຕິບັດໃນປີ 2022. ຍຸດທະສາດດັ່ງກ່າວ, ໄດ້ພົນຂະຫຍາຍມາຈາກ " ໂຄງການສ້າງໂລກຄືນໃໝ່ທີ່ດີກວ່າ" Build Back Better World (B3W) ທີ່ຜູ້ນຳກຸ່ມປະເທດ G7 ໄດ້ຮັບຮອງໃນເດືອນ ມິຖຸນາ 2021. ຂໍ້ສັງເກດ: ຍຸດທະສາດດັ່ງກ່າວ ສ້າງຂຶ້ນມາເພື່ອແຂ່ງຂັນກັບ ໂຄງການເສັ້ນທາງສາຍໄໝ (BRI) ຂອງ ສປ ຈີນ ໃນພາກພື້ນດັ່ງກ່າວ ເພື່ອສ້າງຜົນປະໂຫຍດໃຫ້ແກ່ກຸ່ມພັນທະມິດຂອງພວກເຂົາ.

ໃນວັນທີ 25 ກໍລະກົດ 2021, ທ່ານ ວລາດີເມຍ ປູຕິນ, ປະທານາທິບໍດີລັດເຊຍ, ໄດ້ເຂົ້າຮ່ວມພິທີສະເຫຼີມສະຫຼອງວັນສ້າງຕັ້ງກອງທັບເຮືອລັດເຊຍ ຄົບຮອບ 325 ປີ ທີ່ນະຄອນເຊັນປີເຕີສະເບີກ, ເຊິ່ງມີການເດີນເຮືອເປັນຂະບວນ, ນຳເອົາອາວຸດຍຸດໂທປະກອນທີ່ທັນສະໄໝ, ເຕັກນິກການເດີນເຮືອ ແລະ ການປະຕິບັດງານທີ່ຊຳນານງານຂອງລູກເຮືອ ມາສະແດງໄດ້ຢ່າງຄ່ອງແຄ້ວ ເຊິ່ງແຕ່ລະຂະບວນປະກອບດ້ວຍເຮືອສູ້ຮົບ, ເຮືອດຳນ້ຳ, ເຄື່ອງບິນທາງອາກາດ, ເຮືອປ້ອງກັນເຮືອດຳນ້ຳ, ເຮືອກວາດທຸ່ນລະເບີດທາງທະເລ, ເຮືອລາກຈູງ ແລະ ອື່ນໆ. ນອກຈາກນີ້ ຍັງມີເຮືອຮົບຫວຽດນາມ, ອິນເດຍ, ອີຣານ ແລະ ປາກິດສະຖານ ເຂົ້າຮ່ວມ. ພິທີສະເຫຼີມສະຫຼອງ ດັ່ງກ່າວ ຖືເປັນການສະແດງຄວາມເຕີບໃຫຍ່ ຢ່າງບໍ່ຢຸດຢັ້ງຂອງກອງທັບເຮືອລັດເຊຍ ທີ່ຍາມໃດ ກໍພ້ອມຮັບມື ແລະ ຕ້ານຄືນ ການຮຸກຮານຈາກພາຍນອກ.

**4) ສະພາບການ ໃນຂົງເຂດຕາເວັນອອກກາງ**

ສະພາບໃນຂົງເຂດຕາເວັນອອກກາງ ຍັງສືບຕໍ່ເພີ່ມທະວີຄວາມເຄັ່ງຕຶງຂຶ້ນເລື້ອຍໆ ແລະ ຖືເປັນຂົງເຂດຍາດແຍ່ງ ດ້ານການທະຫານ ຂອງປະເທດມະຫາອຳນາດ ເພື່ອຍາດແຍ່ງຜົນປະໂຫຍດ ແລະ ຂະຫຍາຍອິດທິພົນ ໃນຂົງເຂດດັ່ງກ່າວ. ເຫດການທີ່ພົ້ນເດັ່ນ ແມ່ນ ອາເມລິກາ ຈະຖອນທະຫານຂອງຕົນ ອອກຈາກອາຟະການິດສະຖານ ໃຫ້ສຳເລັດ ໃນວັນທີ 11 ກັນຍາ 2021, ເຊິ່ງທ່ານ ໂຈ ໄບເດັນ, ປະທານາທິດີອາເມລິກາ ໄດ້ກ່າວວ່າ ອາເມລິກາ ໄດ້ບັນລຸເປົ້າໝາຍຂອງຕົນ ໃນອາຟະການິດສະຖານແລ້ວ ກໍຄືການກຳຈັດຜູ້ນຳຂອງກຸ່ມກໍ່ການຮ້າຍ (ບິນລາເດັນ) ແລະ ການເຮັດໃຫ້ກຸ່ມ ອານໍອິດະ ອ່ອນແອລົງ ແລະ ບັນຫາອາຟະການິດສະຖານ ຈະບໍ່ໃຫ້ເປັນພາລະຂອງປະທານາທິບໍດີອາເມລິກາຄົນຕໍ່ໄປອີກ. ພ້ອມທັງ ໄດ້ສະແດງຄວາມເຊື່ອໝັ້ນວ່າ ກອງທັບອາຟະການິດສະຖານຈະສາມາດຕໍ່ສູ້ກັບກຸ່ມຕາລີບັນໄດ້ ຫຼັງຈາກກອງທັບ ສ.ອາເມລິກາ ໄດ້ສະໜອງອາວຸດຍຸດໂທປະກອນ ແລະ ຝຶກທະຫານອາຟະການິດສະຖານ ຈຳນວນ 300.000 ຄົນ ໃນໄລຍະ 20 ປີ ຜ່ານມາ. ອາເມລິກາ ຍັງຈະຮັກສາທະຫານໄວ້ປະມານ 650 ຄົນ ເພື່ອປະຕິບັດໜ້າທີ່ຮັກສາຄວາມປອດໄພໃຫ້ແກ່ສະຖານທູດ ສ.ອາເມລິກາ ໃນອາຟະການິດສະຖານ ແລະ ເພື່ອປະຕິບັດການດ້ານມະນຸດສະທຳ ເທົ່ານັ້ນ. ເຖິງແມ່ນວ່າ ປະທານາທິບໍດີຂອງອາຟະການິດສະຖານ ສະແດງຄວາມເຊື່ອໝັ້ນຕໍ່ປະຊາຊົນ ວ່າຈະສາມາດຕ້ານກັບກຸ່ມຕາລີບັນໄດ້, ແຕ່ປະຊາຄົມໂລກ ໄດ້ໃຫ້ທັດສະນະວ່າ : ຄວາມຂັດແຍ່ງ ໃນອາຟະການິດສະຖານ ລະຫວ່າງກອງທັບຂອງລັດຖະບານ ແລະ ກຸ່ມຕາລີບັນ ຍັງຈະທະວີຄວາມຮຸນແຮງຂຶ້ນເລື້ອຍໆ ໂດຍສະເພາະໃນບັນດາຕົວເມືອງໃຫຍ່, ເຊິ່ງປັດຈຸບັນ ກຸ່ມຕາລີບັນ ສາມາດຍຶດດິນແດນຈາກລັດຖະບານ ໄດ້ຫຼາຍກວ່າ 1/3 ຂອງປະເທດແລ້ວ. ຕໍ່ກັບການຖອນກຳລັງທະຫານຂອງອາເມລິກາ ອອກຈາກອາຟກະນິດສະຖານ ຢ່າງເປັນຮູບປະທຳໃນຄັ້ງນີ້, ຜູ້ສັງເກດການຈຳນວນໜຶ່ງ ໄດ້ໃຫ້ທັດສະນະວ່າ ແມ່ນຍ້ອນ ອາເມລິກາ ໄດ້ໃຊ້ງົບປະມານຢ່າງມະຫາສານ (ຫຼາຍກວ່າ 2,000 ຕື້ ໂດລາສະຫະລັດ) ແລະ ສູນເສຍທະຫານອາເມລິກາ 2442 ຄົນ, ບາດເຈັບ 20,666 ຄົນ ແລະ ບໍ່ສາມາດສ້າງຄວາມສະຫງົບໃນອາຟະການິດສະຖານໄດ້. ອີກດ້ານໜຶ່ງ, ກໍຍ້ອນ ຄວາມຮຽກຮ້ອງຕ້ອງການດ້ານນະໂຍບາຍລວມຂອງອາເມລິກາ, ງົບປະມານດ້ານການທະຫານຫຼຸດລົງ, ພັນທະມິດຂອງອາເມລິກາ ບໍ່ໃຫ້ການສະໜັບສະໜູນອາເມລິກາ ໃນການມີບົດບາດໃນຂົງເຂດຕາເວັນອອກກາງ.

ຄຽງຄູ່ກັບເຫດການຄວາມບໍ່ສະຫງົບ, ໃນຂົງເຂດຕາເວັນອອກກາງ ໄດ້ມີການເຄື່ອນໄຫວ ໃນລັກສະນະການຮ່ວມມື ໂດຍສະເພາະແມ່ນໃນວັນທີ 10/7/2021, ທ່ານ ຣີເຊັບ ອູໂດກັນ, ປະທານາທິບໍດີຕວັກກີ ໄດ້ພົບປະກັບ ທ່ານ ມາມຸດ ອັບບາສ, ປະທານາທິບໍດີ ປາແລັດສະຕິນ, ທີ່ນະຄອນຫຼວງອິດສະຕັນບູນຂອງຕວັກກີ ເພື່ອປຶກສາຫາລືໃນການຮ່ວມມືສອງຝ່າຍ ເປັນຕົ້ນ ໃນຂົງເຂດການຄ້າ, ວັດທະນະທຳ, ການສຶກສາ ແລະ ການທ່ອງທ່ຽວ. ພ້ອມທັງໄດ້ແລກປ່ຽນຄຳຄິດເຫັນໃນບັນຫາພາກພື້ນ ແລະ ສາກົນ. ທ່ານ ອູໂດກັນ ມີຄຳເຫັນໂຈມຕີອິດສະລາແອນ ທີ່ໃຊ້ອຳນາດແຊກແຊງ ແລະ ຍຶດຄອງ ອະທິປະໄຕຂອງປະເທດອື່ນ, ສິ່ງຜົນກະທົບຕໍ່ ສັນຕິພາບ ແລະ ຄວາມໝັ້ນຄົງ ໃນພາກພື້ນຕາເວັນອອກກາງ, ເຮັດໃຫ້ ຕວັກກີ ບໍ່ສາມາດອົດທົນຕໍ່ຄວາມຮ້າຍກາດຂອງ ອິດສະລາແອນ ທີ່ມີຕໍ່ ປາແລັດສະຕິນ ໄດ້. ການພົບປະຄັ້ງນີ້ ໄດ້ເປັນການຢັ້ງຢືນຄືນ ໃນການສະໜັບສະໜູນເພື່ອຄວາມຍຸດຕິທຳແກ່ປາແລັດສະຕິນ ເພື່ອທວງຄືນດິນແດນທີ່ອິດສະລາແອນ ຍຶດຄອງ ຢ່າງບໍ່ຖືກຕ້ອງ ຕາມກົດໝາຍສາກົນ.

## 3. ການເຄື່ອນໄຫວຂອງບັນດາພັກເພື່ອນມິດຍຸດທະສາດ

### 1) ພັກກອມມູນິດຫວຽດນາມ

- ວັນທີ 05/07/2021, ກອງປະຊຸມຄັ້ງທີ 3 ຂອງຄະນະບໍລິຫານງານສູນກາງພັກກອມມູນິດ ຫວຽດນາມ ຊຸດທີ XIII ໄດ້ໄຂຂຶ້ນ ຢູ່ ນະຄອນຫຼວງຮ່າໂນ້ຍ, ໂດຍການເປັນປະທານຂອງ ສະຫາຍ ຫງວຽນ ຝູຈ້ອງ ເລຂາທິການໃຫຍ່. ກອງປະຊຸມ ໄດ້ປຶກສາຫາລືໃນບາງບັນຫາສຳຄັນຄື: ແຜນການພັດທະນາເສດຖະກິດ-ສັງຄົມໄລຍະ 5 ປີ 2021–2025, ພິຈາລະນາ, ປະກາດໃຊ້ລະບຽບການເຮັດວຽກ ຂອງຄະນະບໍລິຫານງານສູນກາງພັກກອມມູນິດ ຫວຽດນາມ, ກົມການເມືອງ, ຄະນະເລຂາທິການສູນກາງພັກ ແລະ ລະບຽບການເຮັດວຽກຂອງ ຄະນະກຳມະການສູນກາງພັກ, ຂໍ້ກຳນົດກ່ຽວກັບການປະຕິບັດກົດລະບຽບຂອງພັກ ແລະ ຂໍ້ກຳນົດກ່ຽວກັບວຽກງານກວດກາ, ຕິດຕາມກວດກາ, ລະບຽບວິໄນຂອງພັກ ຊຸດທີ XIII. ຄະນະບໍລິຫານງານສູນກາງພັກ ໄດ້ພິຈາລະນາກ່ຽວກັບ ການສືບຕໍ່ບູລະນະບຸກຄະລາກອນບັນດາຕຳແໜ່ງການນຳຂອງບັນດາອົງການແຫ່ງລັດ ແລະ ບາງບັນຫາສຳຄັນອື່ນໆ.

- ວັນທີ 06/07/2021, ສະຫາຍ ຫງວຽນ ຝູຈ້ອງ, ເລຂາທິການໃຫຍ່ຄະນະບໍລິຫານງານ ພັກກອມມູນິດຫວຽດນາມ, ພ້ອມດ້ວຍຄະນະ ໄດ້ເຂົ້າຮ່ວມກອງປະຊຸມສຸດຍອດການນຳພັກກອມມູນິດຈີນ ກັບ ພັກການເມືອງໃນໂລກ; ສະຫາຍ ຫງວຽນ ຝູຈ້ອງ ໄດ້ມີຄຳເຫັນໃນກອງປະຊຸມ ເຊິ່ງມີເນື້ອໃນບາງຕອນວ່າ: “ ໄດ້ຍົກເອົາຄຳເວົ້າຂອງປະທານ ໂຮ່ ຈີມິນ, ວິລະບຸລຸດ, ຜູ້ນຳທີ່ແສນເຄົາລົບຮັກຂອງຫວຽດນາມ ທີ່ວ່າ “ປະຊາຊົນ ຕ້ອງມາກ່ອນ, ບໍ່ມີສິ່ງອື່ນໃດ ທີ່ສຳຄັນກວ່າປະຊາຊົນ, ບໍ່ມີສິ່ງອື່ນໃດໃນໂລກ ທີ່ຈະມີອຳນາດເໜືອກວ່າຄວາມເປັນປຶກແຜ່ນຂອງປະຊາຊົນ”; ເຊື່ອວ່າ ການເຂົ້າຮ່ວມກອງປະຊຸມໃນຄັ້ງນີ້ ເປັນການແບ່ງປັນແນວຄິດໂຮ່ ຈີມິນ, ເພາະວ່າ ປະຊາຊົນ ບໍ່ພຽງແຕ່ເປັນພື້ນຖານທາງສັງຄົມ, ແຕ່ເປັນຊັບພະຍາກອນ ທີ່ມີຜົນຕໍ່ຄວາມເຂັ້ມແຂງຂອງພັກການເມືອງ ແລະ ອົງການຈັດຕັ້ງທາງການເມືອງ, ປະຊາຊົນ ຍັງເປັນເປົ້າໝາຍລວມ ຂອງແນວທາງນະໂຍບາຍຂອງທຸກໆພັກການເມືອງ ກໍຄືທຸກໆປະເທດ; ບັນດາປະເທດ ແລະ ພັກການເມືອງ ຕ້ອງຍົກສູງຄວາມສາມັກຄີເປັນປຶກແຜ່ນ, ຄວາມຮັບຜິດຊອບຕໍ່ສັງຄົມ, ຊຸກຍູ້ການເຈລະຈາຮ່ວມມື, ຄວາມເຂົ້າໃຈ ແລະ ເຄົາລົບສິດທິຂອງກັນ ແລະ ກັນ, ການຮ່ວມມືສາກົນ ເພື່ອຮັບມືກັບສິ່ງທ້າທາຍຕໍ່ຄວາມໝັ້ນຄົງ ໂດຍສະເພາະແມ່ນ ການເຄົາລົບຕໍ່ການແກ້ໄຂບັນດາຂໍ້ຂັດແຍ່ງຕ່າງໆ ແລະ ຮ່ວມກັນຕ້ານການແຜ່ລະບາດຂອງພະຍາດໂຄວິດ-19.

- ສະພາແຫ່ງຊາດຫວຽດນາມ ຊຸດທີ XV ໄດ້ດຳເນີນກອງປະຊຸມຄັ້ງປະຖົມມະລຶກ ແຕ່ວັນທີ 20-28/7/2021 ໂດຍໄດ້ລົງຄະແນນສຽງຮັບຮອງເອົາ ສະຫາຍ ເວືອງດິງເຫວະ, ກຳມະການກົມການເມືອງສູນກາງພັກ ສືບຕໍ່ຮັບໜ້າທີ່ເປັນ ປະທານສະພາແຫ່ງຊາດ ຊຸດທີ XV, ເລືອກຕັ້ງເອົາ ສະຫາຍ ຫງວຽນຊວັນຟຸກ, ກຳມະການກົມການເມືອງສູນກາງພັກ ສະໄໝທີ XIII, ສະມາຊິກສະພາແຫ່ງຊາດ ຊຸດທີ XV, ເປັນປະທານປະເທດແຫ່ງ ສສ ຫວຽດນາມ;ເລືອກຕັ້ງເອົາ ສະຫາຍ ຝ້າມມິງຈິງ, ກຳມະການກົມການເມືອງສູນກາງພັກ ສະໄໝທີ XIII, ສະມາຊິກສະພາແຫ່ງຊາດ ຊຸດທີ XV, ເປັນນາຍົກລັດຖະມົນຕີແຫ່ງ ສສ ຫວຽດນາມ. ນອກນັ້ນ, ກອງປະຊຸມຍັງເລືອກຕັ້ງເອົາ ສະຫາຍ ນ. ຫວໍຖິ ຊວັນແອ໋ງ, ກຳມະການສູນກາງພັກ ເປັນຮອງປະທານປະເທດແຫ່ງ ສສ ຫວຽດນາມ; ສະຫາຍ ຫງວຽນຮວ່າບິ່ງ, ກຳມະການກົມການເມືອງສູນກາງພັກ, ເລຂາທິການສູນກາງພັກ ສະໄໝທີ XIII, ສະມາຊິກສະພາແຫ່ງຊາດ ຊຸດທີ XV ເປັນປະທານສານປະຊາຊົນສູງສຸດ; ສະຫາຍ ເລມິງຈີ່, ກຳມະການສູນກາງພັກ ສະໄໝທີ XIII ເປັນປະທານອົງການໄອຍະການປະຊາຊົນສູງສຸດ. ກອງປະຊຸມໄດ້ຮັບຮອງເອົາ ບຸກຄະລາກອນ ຄະນະລັດຖະບານຊຸດໃໝ່ ປະກອບດ້ວຍ 27 ສະຫາຍຄື: ນາຍົກລັດຖະມົນຕີ, ຮອງນາຍົກລັດຖະມົນຕີ 4 ສະຫາຍ, ລັດຖະມົນຕີກະຊວງ, ອົງການທຽບເທົ່າ 22 ສະຫາຍ ແລະ ກົງຈັກລັດຖະບານ ປະກອບດ້ວຍ 18 ກະຊວງ ແລະ 4 ອົງການທຽບເທົ່າ.

### 2) ພັກກອມມູນິດຈີນ

ໃນວັນທີ 06/07/2021, ສະຫາຍ ສີ ຈິ້ນຜິງ, ເລຂາທິການໃຫຍ່, ປະທານປະເທດແຫ່ງ ສປ ຈີນ ໄດ້ກ່າວໃນກອງປະຊຸມພັກກອມມູນິດຈີນກັບພັກການເມືອງໃນໂລກ ໂດຍຜ່ານວີດີໂອທາງໄກ ເຊິ່ງມີເນື້ອໃນບາງຕອນວ່າ "ເນື່ອງໃນໂອກາດວັນສ້າງຕັ້ງພັກກອມມູນິດຈີນຄົບຮອບ 100 ປີ, ຮ່ວມກັບບັນດາຜູ້ນໍາຂອງພັກການເມືອງ 500 ກວ່າພັກທີ່ມາຈາກ 160 ກວ່າປະເທດ, ຜູ້ຕາງໜ້າພັກການເມືອງຫຼາຍກວ່າ 1 ໝື່ນທ່ານ ໄດ້ປຶກສາຫາລືກ່ຽວກັບຫົວຂໍ້ທີ່ວ່າ "ສ້າງຄວາມຜາສຸກ ໃຫ້ແກ່ປະຊາຊົນ: ພາລະໜ້າທີ່ຂອງພັກການເມືອງ". ພັກກອມມູນິດຈີນໄດ້ເຕົ້າໂຮມຄວາມສາມັກຄີ ແລະ ນໍາພາປະຊາຊົນຈີນບຸກບືນສູ້ຊົນຢ່າງຕໍ່ເນື່ອງ, ຊຸກຍູ້ປະຊາຊາດຈີນໃຫ້ບັນລຸການພັດທະນາແບບກ້າວກະໂດດ ຈາກການລຸກຢືນຂຶ້ນ ຮັ່ງມີຂຶ້ນ ຈົນຮອດ ເຂັ້ມແຂງຂຶ້ນ. ພັກກອມມູນິດຈີນໄດ້ຍຶດໝັ້ນໃນຫລັກການຮ່ວມຊະຕາກໍານໍາກັນລະຫວ່າງປະຊາຊົນຈີນກັບປະຊາຊົນບັນດາປະເທດໃນທົ່ວໂລກ, ກໍາແໜ້ນທິດທາງການພັດທະນາກ້າວເດີນໄປໜ້າຂອງຈີນ ແລະ ຊຸກຍູ້ການພັດທະນາ ແລະ ຄວາມຈະເລີນຮຸ່ງເຮືອງຮ່ວມກັນ ຂອງບັນດາປະເທດທ່າມກາງສະພາບການລວມຂອງໂລກ ແລະ ກະແສຂອງຍຸກສະໄໝ. ຜົນສໍາເລັດຄັ້ງປະຫວັດສາດຂອງພັກກອມມູນິດຈີນ ແລະ ປະຊາຊົນຈີນ, ບໍ່ສາມາດປາສະຈາກໄດ້ການສະໜັບສະໜູນທີ່ເຂັ້ມແຂງ ຂອງປະຊາຊົນບັນດາປະເທດໃນໂລກ. ໃນຂະນະທີ່ ໂລກກໍາລັງປະສົບກັບສະພາບການປ່ຽນແປງແບບບໍ່ເຄີຍມີມາກ່ອນໃນຮອບຮ້ອຍປີ, ໂລກຫັນເປັນຫຼາຍຂົ້ວ, ເສດຖະກິດໂລກາພິວັດພວມມີການປ່ຽນແປງຢ່າງເລິກເຊິ່ງ, ບັນດາປະເທດມີການພົວພັນກັນ, ເພິ່ງພາອາໄສກັນ ແລະ ສິ່ງຜົນສະທ້ອນໃຫ້ແກ່ກັນນັບມື້ນັບແໜ້ນແຟ້ນຂຶ້ນ. ເພື່ອຮັບມືກັບສິ່ງທ້າທາຍຈາກການແຜ່ລະບາດຂອງພະຍາດໂຄວິດ-19, ການຊຸກຍູ້ການຟື້ນຟູເສດຖະກິດ, ການຮັກສາສະຖຽນລະພາບຂອງໂລກ, ເພື່ອບັນລຸເປົ້າໝາຍເຫລົ່ານີ້, ປະຊາຄົມໂລກໄດ້ສຸມຄວາມພະຍາຍາມຢ່າງລໍາບາກ, ພັກການເມືອງບັນດາປະເທດໄດ້ຕັ້ງໜ້າຄົ້ນຄວ້າ ເຊິ່ງໄດ້ສະແດງໃຫ້ເຫັນ ຄວາມຮັບຜິດຊອບຂອງຕົນ. ມວນມະນຸດແມ່ນເອກະພົບດຽວກັນ, ໜ່ວຍໂລກເປັນບ້ານເມືອງຮ່ວມອັນດຽວກັນ. ເມື່ອພະເຊີນກັບສິ່ງທ້າທາຍຮ່ວມ, ບໍ່ວ່າຄົນໃດຫຼືປະເທດໃດກໍບໍ່ສາມາດຮັບມືໄດ້ພຽງລໍາພັງ. ມະນຸດເຮົາມີທາງອອກພຽງເສັ້ນທາງດຽວເທົ່ານັ້ນຄື: ຮ່ວມແຮງຮ່ວມໃຈກັນ, ປອງດອງກັນ ແລະ ຮ່ວມມືກັນ ເພື່ອການຄົງຕົວຢູ່ຮ່ວມກັນ. ພັກການເມືອງໃນຖານະເປັນກໍາລັງສໍາຄັນໃນການຊຸກຍູ້ຄວາມກ້າວໜ້າຂອງມວນມະນຸດ, ຄວນມຸ້ງໝັ້ນເດີນຕາມທິດທາງກ້າວໄປໜ້າຢ່າງຖືກຕ້ອງ, ແບກຫາບໜ້າທີ່ປະຫວັດສາດໃນການສະແຫວງຫາຄວາມຜາສຸກໃຫ້ແກ່ປະຊາຊົນ, ສະແຫວງຫາຄວາມກ້າວໜ້າໃຫ້ແກ່ມວນມະນຸດ.

### 3) ພັກແຮງງານເກົາຫຼີ

ວັນທີ 28/07/2021, ສະຫະພັນນັກຮົບເກົ່າ ສປປ ເກົາຫຼີ ໄດ້ເປີດກອງປະຊຸມເພື່ອສະເຫຼີມສະຫຼອງວັນຄົບຮອບຍຸດຕິສົງຄາມສອງເກົາຫຼີ ໂດຍການເປັນປະທານ ຂອງ ສະຫາຍ ກິມ ເຈິງອຸນ, ເລຂາທິການໃຫຍ່ຄະນະບໍລິຫານງານສູນກາງພັກແຮງງານເກົາຫຼີ ແລະ ມີການນໍາຂັ້ນສູງເຂົ້າຮ່ວມ. ສະຫາຍ ກິມ ເຈິງອຸນ ໃຫ້ກຽດມີຄໍາເຫັນຕໍ່ກອງປະຊຸມເຊິ່ງມີເນື້ອໃນບາງຕອນວ່າ " ສປປ ເກົາຫຼີ ກຽມພ້ອມທີ່ຈະປະເຊີນໜ້າກັບໄພຂົ່ມຂູ່ຈາກພາຍນອກ ແລະ ຈະສືບຕໍ່ພາລະກິດປົກປັກຮັກສາໝາກຜົນຂອງການປະຕິວັດ ເພື່ອນໍາເອົາຄວາມຈະເລີນຮຸ່ງເຮືອງມາສູ່ປະຊາຊົນ ສປປ ເກົາຫຼີ ກໍ່ຄືປະເທດຊາດ". ຂະນະດຽວກັນ, ສປປ ເກົາຫຼີ ແລະ ສ. ເກົາຫຼີ ໄດ້ເປີດໂທລະສັບສາຍດ່ວນ ທາງການທະຫານ ແລະ ທາງການທູດ ລະຫວ່າງກັນ ຄືນໃໝ່ ຫລັງຈາກໄດ້ຢຸດຕິໄປເກືອບ 14 ເດືອນ. ສປປ ເກົາຫຼີ ກ່າວວ່າ ຕົນຕ້ອງການປັບປຸງສາຍພົວພັນ " ໄວເທົ່າທີ່ຈະເປັນໄປໄດ້" ທ່າມກາງວິກິດການດ້ານເສດຖະກິດ ແລະ ການປິດລ້ອມຈາກສາກົນ.

# II. ການເຄື່ອນໄຫວວຽກງານຂອງການນໍາພັກ ປະຊາຊົນ ປະຕິວັດລາວ

**1. ສະຫາຍ ບຸນທອງ ຈິດມະນີ, ກໍາມະການກົມການເມືອງສູນກາງພັກ, ຜູ້ປະຈໍາການຄະນະເລຂາທິການສູນກາງພັກ, ຮອງປະທານປະເທດແຫ່ງ ສປປ ລາວ ເຂົ້າຮ່ວມກອງປະຊຸມສຸດຍອດການນໍາພັກກອມມູນິດຈີນ ກັບ ພັກການເມືອງໃນໂລກ ຜ່ານວິດີໂອທາງໄກ ໃນວັນທີ 6 ກໍລະກົດ 2021 ທີ່ນະຄອນຫຼວງປັກກິ່ງ, ສປ ຈີນ**



ໃນວັນທີ 6 ກໍລະກົດ 2021, ສະຫາຍ ບຸນທອງ ຈິດມະນີ, ກໍາມະການກົມການເມືອງສູນກາງພັກ, ຜູ້ປະຈໍາການຄະນະເລຂາທິການສູນກາງພັກ, ຮອງປະທານປະເທດແຫ່ງ ສປປ ລາວ ໄດ້ນໍາພາຄະນະຜູ້ແທນພັກ ປປ ລາວ ເຂົ້າຮ່ວມກອງປະຊຸມສຸດຍອດການນໍາພັກກອມມູນິດຈີນ ກັບ ພັກການເມືອງໃນໂລກ ໂດຍຜ່ານວິດີໂອທາງໄກ, ເຊິ່ງໄດ້ຈັດຂຶ້ນທີ່ນະຄອນຫຼວງປັກກິ່ງ, ສປ ຈີນ ໂດຍການເປັນເຈົ້າພາບ ຂອງສູນກາງພັກກອມມູນິດຈີນ ພາຍໃຕ້ຫົວຂໍ້: "ສ້າງຄວາມຜາສຸກໃຫ້ແກ່ປະຊາຊົນ: ພາລະໜ້າທີ່ຂອງພັກການເມືອງ". ໃນກອງປະຊຸມຄັ້ງນີ້ ມີບັນດາຜູ້ແທນຂັ້ນສູງຂອງພັກ ຫຼາຍກວ່າ 500 ທ່ານ ແລະ ຜູ້ແທນໃນລະດັບອື່ນໆ ຫຼາຍກວ່າ 10.000 ທ່ານ ຈາກພັກການເມືອງ ແລະ ອົງການຈັດຕັ້ງການເມືອງຕ່າງໆ ຈາກຫຼາຍກວ່າ 160 ປະເທດ ເຂົ້າຮ່ວມ.

ໃນໂອກາດດັ່ງກ່າວ, ສະຫາຍ ບຸນທອງ ຈິດມະນີ ໄດ້ປະກອບຄໍາເຫັນຕໍ່ກອງປະຊຸມ ເປັນລາຍລັກອັກສອນ ໂດຍໄດ້ສະແດງຄວາມຊົມເຊີຍວັນສ້າງຕັ້ງພັກກອມມູນິດຈີນ ຄົບຮອບ 100 ປີ, ຕີລາຄາສູງຕໍ່ການເຕີບໃຫຍ່ເຂັ້ມແຂງຢ່າງບໍ່ຢຸດຢັ້ງ ແລະ ໄຊຊະນະອັນໃຫຍ່ຫຼວງເປັນກ້າວໆມາ ຂອງພັກກອມມູນິດຈີນ ໃນໄລຍະ 1 ສະຕະວັດ ໃນການນໍາພາປະຊາຊົນຈີນ, ເຮັດສໍາເລັດການປະຕິວັດປົດປ່ອຍຊາດ ແລະ ສະຖາປະນາ ສປ ຈີນ ຢ່າງສະຫງ່າຜ່າເຜີຍ ໃນປີ 1949, ດໍາເນີນພາລະກິດປະຕິຮູບ ເປີດປະຕູສູ່ໂລກພາຍນອກຂອງພັກ ຢ່າງກ້າຫານ, ສ້າງການຫັນປ່ຽນຢ່າງໃຫຍ່ຫລວງໃຫ້ແກ່ການພັດທະນາຢ່າງກ້າວກະໂດດຂຶ້ນ ແລະ ມະຫັດສະຈັນ ບົນເສັ້ນທາງແຫ່ງການສ້າງສັງຄົມນິຍົມທີ່ມີສີສັນພິເສດຂອງຈີນ. ພ້ອມທັງຊົມເຊີຍ ຕໍ່ການເປັນເຈົ້າພາບຈັດກອງປະຊຸມສຸດຍອດການນໍາພັກກອມມູນິດຈີນ ກັບ ພັກການເມືອງໃນໂລກ ຄັ້ງນີ້.

ກອງປະຊຸມ ໄດ້ເອກະພາບຮັບຮອງເອົາຖະແຫຼງການຮ່ວມ, ເຊິ່ງໄດ້ສະເໜີໃຫ້ບັນດາພັກການເມືອງຂອງທຸກປະເທດ ຈົ່ງເຊີດຊູມານະຈິດໃນການສ້າງທັດສະນະທີ່ເປັນເອກະພາບ ກ່ຽວກັບ ຄຸນຄ່າລວມຂອງມວນມະນຸດ; ສົ່ງເສີມການພັດທະນາຮ່ວມກັນ ເພື່ອພ້ອມກັນບັນລຸວາລະ 2030 ເພື່ອການພັດທະນາແບບຍືນຍົງຂອງອົງການສະຫະປະຊາຊາດ; ສ້າງໂລກໃຫ້ກາຍເປັນມາຕຸພູມແຫ່ງມິດໄມຕີ ໂດຍການບັນລຸ "ຄວາມສະເໝີພາບລະຫວ່າງຮຸ່ນຄົນ"; ຮ່ວມແຮງຮ່ວມໃຈກັນປົກປ້ອງຊີວິດ ແລະ ສຸຂະພາບຂອງປະຊາຊົນ ໂດຍສະເພາະ ໃນການຕ້ານ ແລະ ແກ້ໄຂພະຍາດໂຄວິດ-19 ແລະ ປັບປຸງຊີວິດການເປັນຢູ່ຂອງປະຊາຊົນໃຫ້ດີຂຶ້ນ; ອຳນວຍຄວາມສະດວກໃຫ້ແກ່ການແລກປ່ຽນ ແລະ ການຮຽນຮູ້ເຊິ່ງກັນ ແລະ ກັນ ລະຫວ່າງບັນດາອະລິຍະທຳຕ່າງໆ; ຍົກສູງຄວາມສາມາດໃນການບໍລິຫານຂອງພັກ ໂດຍຜ່ານການກໍ່ສ້າງພັກໃຫ້ມີຄວາມທັນສະໄໝ, ສ້າງກົດລະບຽບການປົກຄອງສາກົນທີ່ດີກວ່າເກົ່າ ບົນພື້ນຖານຈຸດປະສົງ ແລະ ຫຼັກການຂອງກົດບັດສະຫະປະຊາຊາດ.

## 2. ພິທີສະເຫຼີມສະຫຼອງ ວັນສ້າງຕັ້ງພັກກອມມູນິດຈີນ ຄົບຮອບ 100 ປີ






ໃນວັນທີ 15 ກໍລະກົດ 2021, ສະຖານເອກອັກຄະລັດຖະທູດ ແຫ່ງ ສປ ຈີນ ປະຈຳ ສປປ ລາວ ໄດ້ຮ່ວມກັບ ຄະນະພົວພັນຕ່າງປະເທດສູນກາງພັກ ຈັດພິທີໂຮມຊຸມນຸມສະເຫຼີມສະຫຼອງວັນສ້າງຕັ້ງພັກກອມມູນິດຈີນ ຄົບຮອບ 100 ປີ (01/07/1921-01/07/2021) ທີ່ນະຄອນຫຼວງວຽງຈັນ, ໂດຍມີ ສະຫາຍ ທອງລຸນ ສີສຸລິດ, ເລຂາທິການໃຫຍ່ ຄະນະບໍລິຫານງານສູນກາງພັກປະຊາຊົນປະຕິວັດລາວ, ປະທານປະເທດ ແຫ່ງ ສປປ ລາວ, ການນຳຂັ້ນສູງພັກ-ລັດ, ອົງການຈັດຕັ້ງມະຫາຊົນ ແລະ ຜູ້ຕາງໜ້າຈາກບັນດາອົງການຂອງພັກ-ລັດ, ພ້ອມດ້ວຍພະນັກງານສະຖານທູດຈີນ, ນັກທຸລະກິດ ແລະ ສະມາຄົມຊາວຈີນຕ່າງດ້າວ ເຂົ້າຮ່ວມ.

ໃນພິທີດັ່ງກ່າວ, ສະຫາຍ ຈຽງ ຈ້າຍຕົງ, ເອກອັກຄະລັດຖະທູດວິສາມັນຜູ້ມີອຳນາດເຕັມ ແຫ່ງ ສປ ຈີນ ປະຈຳ ສປປ ລາວ ໄດ້ມີຄຳເຫັນກ່ຽວກັບມູນເຊື້ອ ແລະ ວິລະກຳອັນສະຫງ່າອົງອາດ ຂອງ ພັກກອມມູນິດຈີນ ໃນການນຳພາປະຊາຊົນຈີນອ້າຍນ້ອງ ເຮັດສຳເລັດການປະຕິວັດປົດປ່ອຍຊາດ, ສະຖາປະນາ ສປ ຈີນ ຢ່າງສະຫງ່າຜ່າເຜີຍໃນປີ 1949, ອັນເປັນການໄຂສັງກາດໃໝ່ ແຫ່ງການພັດທະນາ ສປ ຈີນ ຕາມເສັ້ນທາງສັງຄົມນິຍົມ.

ໃນໂອກາດດັ່ງກ່າວ, ສະຫາຍ ທອງສະຫວັນ ພົມວິຫານ, ກຳມະການສູນກາງພັກ, ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ປປ ລາວ ໄດ້ຕາງໜ້າໃຫ້ສູນກາງພັກ ປປ ລາວ ແລະ ປະຊາຊົນລາວບັນດາເຜົ່າ ສະແດງຄວາມຊົມເຊີຍຢ່າງສຸດອົກສຸດໃຈ ຕໍ່ບັນດາຜົນສຳເລັດອັນໃຫຍ່ຫຼວງ ແລະ ຮອບດ້ານ ທີ່ພັກ, ລັດຖະບານ ແລະ ປະຊາຊົນຈີນອ້າຍນ້ອງ ຍາດມາໄດ້ໃນໄລຍະໜຶ່ງສະຕະວັດຜ່ານມາ, ໂດຍໄດ້ຕີລາຄາວ່າ, ໃນຕະຫຼອດໄລຍະ 100 ປີຜ່ານມາ, ພັກກອມມູນິດຈີນ ໄດ້ຍົກສູງຄວາມຮັບຜິດຊອບທາງການເມືອງຕໍ່ພາລະກຳປະຫວັດສາດຂອງຈີນ, ຍຶດໝັ້ນໃນອຸດົມການສັງຄົມນິຍົມ ແລະ ຜົນປະໂຫຍດຂອງປະຊາຊົນຢ່າງເດັດດ່ຽວໜຽວແໜ້ນ, ນຳພາປະຊາຊົນຈີນອ້າຍນ້ອງຜ່ານຜ່າການທົດສອບທີ່ດຸເດືອດຂ້ຽວຂາດ, ເຮັດສຳເລັດການປະຕິວັດປົດປ່ອຍຊາດ, ສະຖາປະນາ ສປ ຈີນ, ດຳເນີນການປະຕິຮູບ ແລະ

ເປີດປະຕູສູ່ພາຍນອກ ກໍຄື ນໍາພາປະຊາຊົນຈີນອ້າຍນ້ອງບູລະນະສ້າງສາລະບອບສັງຄົມນິຍົມທີ່ມີສີສັນພິເສດຂອງຈີນ ຢ່າງມີຜົນສໍາເລັດ ທີ່ເປັນພື້ນຖານ ແລະ ໝັ້ນແໜ້ນ. ການຈັດພິທີໂຮມຊຸມນຸມໃນຄັ້ງນີ້ ເປັນໜຶ່ງໃນກິດຈະກໍາສໍາຄັນ ໃນບັນດາກິດຈະກໍາປີ 2021, ເຊິ່ງສອງຝ່າຍ ລາວ-ຈີນ ໄດ້ຕົກລົງນໍາກັນເປັນປີມິດຕະພາບ ລາວ-ຈີນ, ຈະເປັນການປະກອບສ່ວນສໍາຄັນເຂົ້າໃນການເສີມຂະຫຍາຍສາຍພົວພັນມິດຕະພາບອັນເປັນມູນເຊື້ອ ທີ່ມີມາແຕ່ດົນນານ ລະຫວ່າງ ສອງພັກ, ສອງລັດ ແລະ ປະຊາຊົນສອງຊາດ ລາວ-ຈີນ ກໍຄື ການສ້າງຄູ່ຮ່ວມຊະຕາກໍາ ລາວ-ຈີນ ໃຫ້ນັບມື້ນັບແຕກດອກອອກຜົນ ແລະ ນໍາເອົາຜົນປະໂຫຍດຕົວຈິງມາສູ່ປະຊາຊົນສອງຊາດ ລາວ-ຈີນ.

## 3. ການພົບປະລະຫວ່າງ ສະມາຄົມມິດຕະພາບ ລາວ-ຫວຽດນາມ ແລະ ສະມາຄົມມິດຕະພາບ ຫວຽດນາມ-ລາວ




ໃນວັນທີ 8 ກໍລະກົດ 2021, ສະມາຄົມມິດຕະພາບ ລາວ-ຫວຽດນາມ ແລະ ສະມາຄົມມິດຕະພາບ ຫວຽດນາມ-ລາວ ໄດ້ຈັດກອງປະຊຸມພົບປະທາງໄກ, ຝ່າຍລາວ ນໍາໂດຍ ສະຫາຍ ຄໍາໃບ ດໍາລັດ, ກໍາມະການສູນກາງພັກ, ຮອງປະທານສະພາແຫ່ງຊາດ, ປະທານສະມາຄົມມິດຕະພາບ ລາວ-ຫວຽດນາມ ຂັ້ນສູນກາງ ແລະ ຝ່າຍຫວຽດນາມ ນໍາໂດຍ ສະຫາຍ ເຈີນວັນຕຸ້ຍ, ອະດີດກໍາມະການຄະນະບໍລິຫານງານສູນກາງພັກ, ອະດີດຫົວໜ້າຄະນະຮັບຜິດຊອບວຽກງານຜູ້ແທນສະພາ, ອະດີດຮອງຫົວໜ້າຄະນະຈັດຕັ້ງສູນກາງພັກ, ປະທານສະມາຄົມມິດຕະພາບ ຫວຽດນາມ-ລາວ ຂັ້ນສູນກາງ. ສອງຝ່າຍ ໄດ້ຕີລາຄາສູງການພົວພັນຮ່ວມມື ລະຫວ່າງສອງສະມາຄົມມິດຕະພາບ ໃນໄລຍະຜ່ານມາ ແລະ ປຶກສາຫາລືແຜນການຮ່ວມມືໃນຕໍ່ໜ້າ ໂດຍສະເພາະແມ່ນ ບັນດາກິດຈະກໍາຕ່າງໆ ທີ່ຈະໄດ້ຮ່ວມກັນຈັດຕັ້ງປະຕິບັດເພື່ອສະເຫຼີມສະຫຼອງປີສາມັກຄີພິເສດ ລາວ-ຫວຽດນາມ ໃນປີ 2022 ທີ່ຈະມາເຖິງ ຄື: ວັນສ້າງຕັ້ງສາຍພົວພັນ ການທູດ ລາວ-ຫວຽດນາມ ຄົບຮອບ 60 ປີ (5/9/1962-5/9/2022) ແລະ ວັນເຊັນສົນທິສັນຍາມິດຕະພາບ ແລະ ການຮ່ວມມື ລາວ-ຫວຽດນາມ ຄົບຮອບ 45 ປີ (18/7/1977-18/7/2022) , ເຊິ່ງສອງຝ່າຍ ຈະໄດ້ຮ່ວມກັນຈັດຕັ້ງປະຕິບັດບຸນມະໂຫລານມິດຕະພາບ, ພິມວາລະສານສະບັບພິເສດ ລາວ-ຫວຽດນາມ, ວາງສະແດງຮູບພາບ ແລະ ບັນດາກິດຈະກໍາປີ່ນອ້ອມຕ່າງໆ ເພື່ອເຜີຍແຜ່ໃຫ້ປະຊາຊົນສອງຊາດລາວ ແລະ ຫວຽດນາມ ໂດຍສະເພາະແມ່ນ ຄົນຮຸ່ນໜຸ່ມ ໄດ້ຮັບຮູ້ ແລະ ເຂົ້າໃຈຢ່າງເລິກເຊິ່ງກ່ຽວກັບສາຍພົວພັນມິດຕະພາບອັນຍິ່ງໃຫຍ່, ຄວາມສາມັກຄີພິເສດ ແລະ ການຮ່ວມມືຮອບດ້ານ ລາວ-ຫວຽດນາມ ທີ່ປະທານໂຮ່ຈິມິນ ຜູ້ນໍາທີ່ຍິ່ງໃຫຍ່ ຂອງປະຊາຊົນ ຫວຽດນາມ, ປະທານ ໄກສອນ ພົມວິຫານ, ປະທານ ສຸພານຸວົງ ຜູ້ນໍາທີ່ແສນເຄົາລົບຮັກ ຂອງ ປະຊາຊົນລາວ ໄດ້ກໍ່ຕັ້ງຂຶ້ນ.

## 4. ສະມາຄົມມິດຕະພາບ ລາວ-ຈີນ ເຂົ້າຮ່ວມກອງປະຊຸມທາງໄກ ກັບສະມາຄົມມິດຕະພາບ ຈີນ-ອາຊຽນ




ວັນທີ 30 ກໍລະກົດ 2021, ທີ່ຄະນະພົວພັນຕ່າງປະເທດສູນກາງພັກ, ສະມາຄົມມິດຕະພາບ ລາວ-ຈີນ ຂັ້ນສູນກາງ ນໍາໂດຍ ທ່ານ ປອ. ຄໍາມະນີ ອິນທິລາດ, ປະທານສະມາຄົມມິດຕະພາບ ລາວ-ຈີນ ຂັ້ນສູນກາງ ພ້ອມດ້ວຍຄະນະ ໄດ້ເຂົ້າຮ່ວມກອງປະຊຸມທາງໄກກັບ ສະມາຄົມມິດຕະພາບ ຈີນ-ອາຊຽນ, ສະມາຄົມມິດຕະພາບປະຊາຊົນຈີນກັບນາໆຊາດ ແລະ ບັນດາສະມາຄົມມິດຕະພາບ ລະຫວ່າງ ອາຊຽນ-ຈີນ ໃນໂອກາດສະເຫຼີມສະຫຼອງວັນສ້າງຕັ້ງສາຍພົວພັນມິດຕະພາບ ລະຫວ່າງ ສປ ຈີນ ກັບບັນດາສະມາຄົມມິດຕະພາບຂອງບັນດາປະເທດ ອາຊຽນ ຄົບຮອບ 30 ປີ (19/8/1991-19/8/ 2021), ພາຍໃຕ້ຫົວຂໍ້: " ສາມັກຄີຮ່ວມມື ຕ້ານການແຜ່ລະບາດຂອງພະຍາດ, ສົ່ງເສີມການ ຟື້ນຟູເສດຖະກິດ ແລະ ປົກປັກຮັກສາສັນຕິພາບ, ສະຖຽນລະພາບ ແລະ ການພັດທະນາໃນພາກພື້ນ ແລະ ສາກົນ". ກອງປະຊຸມຄັ້ງນີ້ ໄດ້ຈັດ ຂຶ້ນໂດຍການເປັນເຈົ້າພາບຂອງ ສະມາຄົມມິດຕະພາບ ຈີນ-ອາຊຽນ ແລະ ສະມາຄົມມິດຕະພາບປະຊາຊົນຈີນກັບນາໆຊາດ

ໃນໂອກາດເຂົ້າຮ່ວມກອງປະຊຸມດັ່ງກ່າວ, ທ່ານ ປອ.ຄໍາມະນີ ອິນທິລາດ ໄດ້ມີຄໍາເຫັນແລກປ່ຽນ ກ່ຽວກັບການແຜ່ລະບາດ ຂອງ ພະຍາດ covid-19 ເປັນສິ່ງທ້າທາຍທີ່ໃຫຍ່ຫຼວງທີ່ສຸດຂອງມວນມະນຸດນັບແຕ່ສົງຄາມໂລກຄັ້ງທີ 2, ພະຍາດດັ່ງກ່າວ ລະບາດຂຶ້ນ ໃນ ທ້າຍ ປີ 2019, ໄດ້ແຜ່ລາມໄປທົ່ວໂລກ ເຮັດໃຫ້ວິຖີການດໍາລົງຊີວິດ, ການຕິດຕໍ່ພົວພັນ ແລະ ຮ່ວມມື ຂອງຄົນເຮົາປ່ຽນແປງໄປ ແລະ ກໍາລັງ ເປັນໄພຂົ່ມຂູ່ຕໍ່ລະບົບສາທາລະນະສຸກກໍ່ຄືການຮັກສາສຸຂະພາບຂອງປະຊາຊົນໃນທົ່ວໂລກ, ປະຊາກອນຫຼາຍລ້ານຄົນເສຍຊີວິດ, ເຊິ່ງໃນນັ້ນ ລວມທັງແພດໝໍ ແລະ ພະຍາບານທີ່ເຮັດໜ້າທີ່ຢູ່ແຖວໜ້າເພື່ອປິ່ນປົວຜູ້ຕິດເຊື້ອ. ການແຜ່ລະບາດຂອງພະຍາດ covid-19 ຍັງສົ່ງຜົນ ກະທົບທີ່ຮ້າຍແຮງຕໍ່ການຂະຫຍາຍຕົວ ຂອງເສດຖະກິດ, ຄວາມປອດໄພທາງສັງຄົມ, ລະບົບການສຶກສາ ແລະ ຄວາມໝັ້ນຄົງທາງດ້ານ ສະບຽງອາຫານຂອງໂລກ, ປະຊາຊົນຫຼາຍຮ້ອຍລ້ານຄົນສູນເສຍວຽກເຮັດງານທໍາ, ຊີວິດການເປັນຢູ່ຫຍຸ້ງຍາກສັບສົນຍ້ອນມາດຕະການ ຕ່າງໆທີ່ກໍານົດອອກ ເພື່ອສະກັດກັ້ນການແຜ່ເຊື້ອໄວຣັດ.

# III. ການເຄື່ອນໄຫວວຽກງານ ຂອງຄະນະນຳ ຄະນະພົວພັນຕ່າງປະເທດສູນກາງພັກ

## 1. ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ລາວ-ກຳປູເຈຍ ພົບປະຜ່ານວິດີໂອທາງໄກ




ວັນທີ 7 ກໍລະກົດ 2021, ທ່ານ ທອງສະຫວັນ ພົມວິຫານ, ກຳມະການສູນກາງພັກ, ຫົວໜ້າຄະນະພົວພັນຕ່າງປະເທດສູນກາງ ພັກ ປປ ລາວ ໄດ້ພົບປະຜ່ານວິດີໂອທາງໄກ ກັບ ທ່ານ ປຣາກ ໂຊຄົນ, ກຳມະການກົມການເມືອງສູນກາງພັກ, ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ປະຊາຊົນ ກຳປູເຈຍ.

ໃນໂອກາດດັ່ງກ່າວ, ທ່ານ ທອງສະຫວັນ ພົມວິຫານ ໄດ້ສະແດງຄວາມຍິນດີຕໍ່ການພົບປະລະຫວ່າງສອງຝ່າຍ, ທັງໄດ້ແຈ້ງສະພາບການພົ້ນເດັ່ນພາຍໃນປະເທດ ກໍ່ຄື ຜົນສຳເລັດເບື້ອງຕົ້ນໃນການຕ້ານການແຜ່ລະບາດຂອງພະຍາດໂຄວິດ-19 ຮອບສອງ ຢູ່ ສ ປປ ລາວ ໃຫ້ຝ່າຍກຳປູເຈຍຊາບ; ຍັງໄດ້ຕີລາຄາສູງຕໍ່ສາຍພົວພັນມິດຕະພາບ ອັນເປັນມູນເຊື້ອ ຄວາມສາມັກຄີ ຖານບ້ານໃກ້ເຮືອນຄຽງທີ່ດີ, ບ້ານອ້າຍເມືອງນ້ອງ, ບ້ານແກ່ວເມືອງດອງ ແລະ ການເປັນຄູ່ຮ່ວມຍຸດທະສາດຮອບດ້ານ ແລະ ໝັ້ນຄົງຍາວນານລະຫວ່າງ ສອງພັກ, ສອງລັດ ແລະ ປະຊາຊົນສອງຊາດ ລາວ-ກຳປູເຈຍ ກໍ່ຄື ລະຫວ່າງສອງຄະນະພົວພັນຕ່າງປະເທດສູນກາງພັກ ລາວ-ກຳປູເຈຍ ຕະຫຼອດໄລຍະຜ່ານມາ. ພິເສດ ທ່ານ ທອງສະຫວັນ ພົມວິຫານ ໄດ້ຕາງໜ້າຄະນະບໍລິຫານງານສູນກາງ ພັກ ປປ ລາວ ສະແດງຄວາມຊົມເຊີຍຢ່າງສຸດອົກສຸດໃຈ ເນື່ອງໃນໂອກາດວັນສ້າງຕັ້ງ ພັກປະຊາຊົນ ກຳປູເຈຍ ຄົບຮອບ 70 ປີ ກໍ່ຄື ວັນສ້າງຕັ້ງສາຍພົວພັນການທູດ ລາວ-ກຳປູເຈຍ ຄົບຮອບ 65 ປີ, ຕີລາຄາສູງ ຕໍ່ບັນດາຜົນສຳເລັດອັນພົ້ນເດັ່ນທີ່ ພັກ, ລັດ ແລະ ປະຊາຊົນກຳປູເຈຍ ຍາດມາໄດ້ໃນການປົກປັກຮັກສາ, ສ້າງສາ ແລະ ພັດທະນາປະເທດຊາດຂອງຕົນ, ເຊື່ອໝັ້ນວ່າ ພາຍໃຕ້ການຊີ້ນຳ-ນຳພາອັນເຂັ້ມແຂງ ຂອງ ພັກປະຊາຊົນກຳປູເຈຍ, ລັດຖະບານ ແລະ ປະຊາຊົນກຳປູເຈຍ ຈະສາມາດສືບຕໍ່ຍາດໄດ້ໄຊຊະນະໃໝ່ໃຫຍ່ຫຼວງກວ່າເກົ່າ ໃນການສ້າງສາ ແລະ ພັດທະນາປະເທດຊາດ ໃຫ້ກ້າວໄປສູ່ຄວາມຈະເລີນວັດທະນາ.

ທ່ານ ປຣາກ ໂຊຄົນ ໄດ້ສະແດງຄວາມຂອບໃຈຕໍ່ການແຈ້ງສະພາບພົ້ນເດັ່ນພາຍໃນຂອງ ສປປ ລາວ, ຕີລາຄາສູງຕໍ່ຜົນສຳເລັດຂອງພັກ, ລັດ ແລະ ປະຊາຊົນລາວ ໃນການຄວບຄຸມການແຜ່ລະບາດຂອງພະຍາດໂຄວິດ-19; ຊົມເຊີຍ ທ່ານ ທອງສະຫວັນ ພົມວິຫານ ທີ່ໄດ້ຮັບເລືອກຕັ້ງເປັນ ກຳມະການສູນກາງພັກ ສະໄໝທີ XI ແລະ ໄດ້ຮັບການແຕ່ງຕັ້ງ ເປັນຫົວໜ້າຄະນະພົວພັນ

ຕ່າງປະເທດສູນກາງພັກ ປປ ລາວ ຄົນໃໝ່; ທ່ານ ໄດ້ແຈ້ງໃຫ້ຝ່າຍລາວຊາບ ກ່ຽວກັບສະພາບການພົ້ນເດັ່ນພາຍໃນພັກ, ພາຍໃນ ປະເທດກຳປູເຈຍ; ຕີລາຄາສູງຕໍ່ສາຍພົວພັນມິດຕະພາບອັນເປັນມູນເຊື້ອທີ່ດີງາມ ລະຫວ່າງ 2 ພັກ, 2 ລັດ ແລະ ປະຊາຊົນ 2 ຊາດ ກໍຄື ລະຫວ່າງ 2 ຄະນະພົວພັນຕ່າງປະເທດສູນກາງພັກ ກຳປູເຈຍ-ລາວ ໃນໄລຍະຜ່ານມາ ກໍ່ຄື ປະຈຸບັນ.

## 2. ຄະນະພົວພັນຕ່າງປະເທດສູນກາງພັກ ຈັດປາຖະກະຖາ ເຜີຍແຜ່ເຊື່ອມຊຶມເອກະສານສຳຄັນຂອງພັກ - ລັດ ແລະ ປະກາດການແຕ່ງຕັ້ງບັນດາຫົວໜ້າກົມ ຄົນໃໝ່




ວັນທີ 14 ກໍລະກົດ 2021, ຄະນະພົວພັນຕ່າງປະເທດສູນກາງພັກ ໄດ້ຈັດຕັ້ງເຜີຍແຜ່ເຊື່ອມຊຶມມະຕິກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກ ປປ ລາວ; ຄຳແນະນຳ ການຈັດຕັ້ງປະຕິບັດກົດລະບຽບພັກປະຊາຊົນປະຕິວັດລາວ ສະໄໝທີ XI; ມູນເຊື້ອວັນສ້າງຕັ້ງພັກ ປປ ລາວ ຄົບຮອບ 66 ປີ; ວັນສ້າງຕັ້ງກຳລັງປ້ອງກັນຄວາມສະຫງົບປະຊາຊົນລາວ ຄົບຮອບ 60 ປີ; ວັນສ້າງຕັ້ງພັກກອມມູນິດຈີນ ຄົບຮອບ 100 ປີ ແລະ ວັນສ້າງຕັ້ງສາຍພົວພັນການທູດ ລາວ - ຈີນ ຄົບຮອບ 60 ປີ ແລະ ລະນຶກວັນຄ້າຍວັນເກີດ ປະທານ ສຸພານຸວົງ ຄົບຮອບ 112 ປີ. ໂດຍການໃຫ້ກຽດປາຖະກະຖາ ຂອງ ສະຫາຍ ທອງສະຫວັນ ພົມວິຫານ, ກຳມະການສູນກາງພັກ, ເລຂາຄະນະພັກ, ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ, ໂດຍມີບັນດາສະຫາຍ ໃນຄະນະບໍລິຫານງານພັກ, ພະນັກງານອາວຸໂສບຳນານ ແລະ ພະນັກງານຫຼັກແຫຼ່ງທົ່ວ ຄະນະພົວພັນຕ່າງປະເທດສູນກາງພັກ ເຂົ້າຮ່ວມຢ່າງພ້ອມພຽງ.

ໃນໂອກາດດັ່ງກ່າວ ຍັງໄດ້ມີການມອບມະຕິຕົກລົງຂອງ ຄະນະເລຂາທິການສູນກາງພັກ ວ່າດ້ວຍການແຕ່ງຕັ້ງ ສະຫາຍ ປອ ສະເຫຼີມໄຊ ທະທົງສັກ, ເປັນຫົວໜ້າກົມ ອາຊີ - ປາຊີຟິກ ແລະ ອາຟຣິກກາ ຄົນໃໝ່ ແລະ ສະຫາຍ ຄຳເຜືອງ ພັນທະໄຊ ເປັນຫົວໜ້າກົມ ຄົ້ນຄວ້າ - ສັງລວມ ຄົນໃໝ່, ເຊິ່ງສະຫາຍ ຫົວໜ້າ ຄຕພ ໄດ້ມີຄຳເຫັນໂອ້ລົມ ແລະ ຊີ້ທິດເຍືອງທາງ ໃຫ້ສືບຕໍ່ເຊີດຊູຄວາມຮັບຜິດຊອບຕໍ່ໜ້າທີ່ການເມືອງທີ່ໄດ້ຮັບມອບໝາຍ, ສືບຕໍ່ຮັດແໜ້ນຄວາມສາມັກຄີ, ເອົາໃຈໃສ່ປະຕິບັດພາລະບົດບາດ, ສິດໜ້າທີ່ຂອງຕົນ. ພ້ອມນັ້ນຍັງໄດ້ຊີ້ນຳບັນດາສະຫາຍໃນຄະນະບໍລິຫານງານພັກ, ຄະນະໜ່ວຍພັກ ພາຍໃນ ຄຕພ ເພີ່ມທະວີການຊີ້ນຳ - ນຳພາຕິດພັນກັບການເສີມຂະຫຍາຍຄວາມເປັນເຈົ້າການ ຂອງບັນດາສະຫາຍສະມາຊິກພັກ, ເຊີດຊູຄວາມຮັບຜິດຊອບໜ້າທີ່ການ ເມືອງຂອງຕົນ.

### 3. ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ຕ້ອນຮັບການເຂົ້າຢ້ຽມຂໍ່ານັບ ຂອງເອກອັກຄະລັດຖະທູດ ສ. ກູບາ ປະຈໍາ ສປປ ລາວ



ວັນທີ 14 ກໍລະກົດ 2021 ທີ່ສໍານັກງານຄະນະພົວພັນຕ່າງປະເທດສູນກາງພັກ, ສະຫາຍ ທອງສະຫວັນ ພົມວິຫານ, ກໍາມະການສູນກາງພັກ, ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ໄດ້ຕ້ອນຮັບການເຂົ້າຢ້ຽມຂໍ່ານັບ ຂອງສະຫາຍ ປາໂບຣ ແອງໂຕນີໂອ ໂຣດຼີເກດສ, ເອກອັກຄະລັດຖະທູດວິສາມັນຜູ້ມີອໍານາດເຕັມ ແຫ່ງ ສ.ກູບາ ປະຈໍາ ສປປ ລາວ, ເຊິ່ງທູດກູບາ ໄດ້ຊົມເຊີຍ ສະຫາຍ ທອງສະຫວັນ ພົມວິຫານ ທີ່ໄດ້ຮັບການເລືອກຕັ້ງເປັນກໍາມະການສູນກາງພັກ ແລະ ໄດ້ຮັບການແຕ່ງຕັ້ງເປັນຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ, ໄດ້ຕີລາຄາສູງຕໍ່ການຮ່ວມມືສອງຝ່າຍ ລະຫວ່າງ ກູບາ-ລາວ ແລະ ໄດ້ຂອບໃຈ ຕໍ່ພັກ, ລັດຖະບານ ແລະ ປະຊາຊົນລາວ ອ້າຍນ້ອງ ທີ່ໃຫ້ການຊ່ວຍເຫຼືອສະໜັບສະໜູນກູບາ ໃນເວທີພາກພື້ນ ແລະ ສາກົນ ຕະຫຼອດມາ, ທັງຍັງໄດ້ແຈ້ງສະພາບ ກ່ຽວກັບ ເຫດການປະທ້ວງໃນວັນທີ 11 ກໍລະກົດ 2021 ທີ່ຜ່ານມາ ທີ່ມີການແຊກແຊງຈາກພາຍນອກ. ສະຫາຍ ທອງສະຫວັນ ພົມວິຫານ ໄດ້ຕາງໜ້າໃຫ້ພັກ, ລັດ ແລະ ປະຊາຊົນລາວບັນດາເຜົ່າ ສະແດງຄວາມຊົມເຊີຍຕໍ່ສາຍພົວພັນຮ່ວມມືທີ່ເປັນມູນເຊື້ອອັນດີງາມ ລະຫວ່າງ ລາວ-ກູບາ ຊຶ່ງໄດ້ຮັບການຊຸກຍູ້ສົ່ງເສີມໃຫ້ຂະຫຍາຍຕົວຢ່າງຕໍ່ເນື່ອງ; ຂອບໃຈ ແລະ ຮູ້ບຸນຄຸນເປັນຢ່າງສູງຕໍ່ພັກ, ລັດ ແລະ ປະຊາຊົນກູບາອ້າຍນ້ອງ ທີ່ໃຫ້ການຊ່ວຍເຫຼືອ ແລະ ສະໜັບສະໜູນ ສປປ ລາວ ຕະຫຼອດໄລຍະຜ່ານມາ; ພ້ອມຕີລາຄາສູງຕໍ່ພັກ, ລັດ ແລະ ປະຊາຊົນກູບາອ້າຍນ້ອງ ທີ່ໄດ້ເດັດດ່ຽວໝຽວແໜ້ນໃນການປົກປັກຮັກສາໝາກຜົນຂອງການປະຕິວັດ ທ່າມກາງການປິດລ້ອມ ແລະ ການຂວ້ຳບາດຂອງຕາເວັນຕົກຕັ້ງ 6 ທົດສະວັດຜ່ານມາ. ຕໍ່ກັບເຫດການປະທ້ວງໃນວັນທີ 11 ກໍລະກົດ 2021 ຜ່ານມາ, ສະຫາຍຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ໄດ້ໃຫ້ທັດສະນະວ່າ ເປັນການປະພຶດທີ່ບໍ່ຖືກຕ້ອງ, ບໍ່ສະແດງເຖິງຜົນປະໂຫຍດຂອງປະຊາຊົນກູບາສ່ວນໃຫຍ່ ແລະ ເປັນການແຊກແຊງຈາກພາຍນອກ. ພັກ ປປ ລາວ ຕີລາຄາສູງ ຕໍ່ນໍ້າໃຈສາກົນຂອງກູບາ, ຕ້ານທຸກຮູບແບບຂອງການປິດລ້ອມ ແລະ ຂວ້ຳບາດຈາກພາຍນອກ, ສະໜັບສະໜູນໝາກຜົນຂອງການປະຕິວັດກູບາທີ່ຍາດມາໄດ້; ຢືນຢັນຄືນແນວທາງນະໂຍບາຍອັນສະເໝີຕົ້ນສະເໝີປາຍຂອງພັກ ປປ ລາວ ໃນການສະໜັບສະໜູນພັກກອມມູນິດກູບາຕ້ານການກະທໍາທຸກຮູບແບບທີ່ບໍ່ເປັນທໍາ ໂດຍສະເພາະ ການປິດລ້ອມທາງດ້ານເສດຖະກິດ, ການຄ້າ ແລະ ການເງິນຂອງຕາເວັນຕົກຕໍ່ກູບາ.

## 4. ທູຕານຸທູດຕ່າງປະເທດ ປະຈຳ ສປປ ລາວ ເຂົ້າຢ້ຽມຂ່ຳນັບ ຫົວໜ້າ ຄຕພ




ໃນວັນທີ 09 ກໍລະກົດ 2021, ທ່ານ ທອງສະຫວັນ ພົມວິຫານ, ກຳມະການສູນກາງພັກ, ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ໄດ້ຕ້ອນຮັບການເຂົ້າຢ້ຽມຂ່ຳນັບຂອງ ທ່ານ ເຈດສະດາ ກະຕະເວທິນ, ເອກອັກຄະຣາຊະທູດ ແຫ່ງຣາຊະອານາຈັກໄທ ປະຈຳ ສປປ ລາວ ແລະ ທ່ານ ນາງ Leow Siu lin, ເອກອັກຄະລັດຖະທູດ ແຫ່ງ ສິງກະໂປ ປະຈຳ ສປປ ລາວ, ເຊິ່ງ ທ່ານ ທອງສະຫວັນ ພົມວິຫານ ໄດ້ສະແດງຄວາມຍິນດີ, ຊົມເຊີຍ ແລະ ເຊື່ອໝັ້ນວ່າ ທ່ານທູດທັງສອງ ຈະສືບຕໍ່ໃຫ້ການຮ່ວມມື ແລະ ປະສານສົມທົບຢ່າງແໜ້ນແຟ້ນກັບພາກສ່ວນກ່ຽວຂ້ອງໃນການປະຕິບັດໜ້າທີ່ການທູດຢູ່ ສປປ ລາວ ເພື່ອເສີມຂະຫຍາຍສາຍພົວພັນມິດຕະພາບ ແລະ ການຮ່ວມມື ລະຫວ່າງ ສປປ ລາວ-ຣາຊະອານາຈັກໄທ, ສປປ ລາວ-ສິງກະໂປ ໃຫ້ນັບມື້ນັບແໜ້ນແຟ້ນ ແລະ ມີໝາກຜົນຍິ່ງໆຂຶ້ນ ເພື່ອນຳເອົາຜົນປະໂຫຍດຕົວຈິງມາສູ່ປະຊາຊົນລາວ ແລະ ບັນດາປະເທດດັ່ງກ່າວ ກໍຄື ເພື່ອສ້າງຄວາມເຂັ້ມແຂງໃຫ້ອາຊຽນ. ໃນຂະນະດຽວກັນ, ທ່ານທູດທັງສອງ ໄດ້ສະແດງຄວາມຂອບໃຈເປັນຢ່າງສູງ ທີ່ໄດ້ມີໂອກາດເຂົ້າຢ້ຽມຂ່ຳນັບ ທ່ານຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ແລະ ຊົມເຊີຍຕໍ່ ທ່ານ ທອງສະຫວັນ ພົມວິຫານ ທີ່ໄດ້ຮັບການເລືອກຕັ້ງເປັນ ກຳມະການສູນກາງພັກ ສະໄໝທີ XI ແລະ ໄດ້ຮັບການແຕ່ງຕັ້ງ ເປັນຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ຄືນໃໝ່, ພ້ອມທັງ ໄດ້ໃຫ້ຄຳໝັ້ນສັນຍາຈະເຮັດສຸດຄວາມສາມາດຂອງຕົນໃນການເສີມຂະຫຍາຍສາຍພົວພັນມິດຕະພາບ ແລະ ການຮ່ວມມືທີ່ດີຖານບ້ານໃກ້ເຮືອນຄຽງທີ່ເປັນມູນເຊື້ອອັນດີງາມມາແຕ່ບູຮານນະການ ລະຫວ່າງ ໄທ-ລາວ ກໍຄື ສາຍພົວພັນມິດຕະພາບ ລະຫວ່າງ ສິງກະໂປ-ລາວ ໃຫ້ນັບມື້ແຕກດອກອອກຜົນຍິ່ງໆຂຶ້ນ.




ໃນວັນທີ 20 ແລະ 22 ກໍລະກົດ 2021, ທ່ານ ທອງສະຫວັນ ພົມວິຫານ, ກໍາມະການສູນກາງພັກ, ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ໄດ້ຕ້ອນຮັບ ການເຂົ້າຢ້ຽມຂໍ່ານັບ ຂອງທ່ານ ທ່ານ ດຣ. ປີເຕີ ເຮມອນ, ເອກອັກຄະລັດຖະທູດ ແຫ່ງສະຫະລັດ ອາເມລິກາ ແລະ ທ່ານ ໂພລ ເຄລີ, ເອກອັກຄະລັດຖະທູດ ແຫ່ງ ອິດສະຕາລີ ປະຈໍາ ສປປ ລາວ ຕາມລໍາດັບ. ທ່ານທູດທັງສອງ ໄດ້ສະແດງຄວາມຊົມເຊີຍ ທ່ານ ທອງສະຫວັນ ພົມວິຫານ ທີ່ໄດ້ຮັບການເລືອກຕັ້ງເປັນກໍາມະການສູນກາງພັກ ແລະ ເປັນຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ, ທັງຕີລາຄາສູງຕໍ່ການຮ່ວມມືສອງຝ່າຍ ທີ່ນັບມື້ນັບໄດ້ຮັບການເສີມຂະຫຍາຍຂຶ້ນເລື້ອຍໆ. ທ່ານ ທອງສະຫວັນ ພົມວິຫານ ໄດ້ຕີລາຄາສູງຕໍ່ສາຍພົວພັນ ແລະ ການຮ່ວມມືທີ່ດີ ລະຫວ່າງ ລາວ-ອາເມລິກາ ຕະຫຼອດໄລຍະ 60 ກວ່າປີ ແລະ ການພົວພັນ ລະຫວ່າງ ລາວ-ອິດສະຕາລີ ຕະຫຼອດ 7 ທົດສະວັດຜ່ານມາ ແລະ ເຫັນວ່າ ສາຍພົວພັນດັ່ງກ່າວສືບຕໍ່ຂະຫຍາຍຕົວຢ່າງຕໍ່ເນື່ອງ, ທັງໄດ້ສະແດງຄວາມຂອບໃຈຢ່າງຈິງໃຈຕໍ່ລັດຖະບານ ແລະ ປະຊາຊົນອາເມລິກາ ກໍຄື ລັດຖະບານ ແລະ ປະຊາຊົນອິດສະຕາລີ ທີ່ໄດ້ໃຫ້ການສະໜັບສະໜູນ ສປປ ລາວ ຈັດຕັ້ງປະຕິບັດໂຄງການຮ່ວມມືສອງຝ່າຍໃນຂະແໜງການຕ່າງໆ ເປັນຕົ້ນແມ່ນ ສາທາລະນະສຸກ, ການຄ້າ, ການລົງທຶນ, ການສຶກສາ, ກະສິກໍາ-ປ່າໄມ້, ການກໍ່ສ້າງໂຄງລ່າງພື້ນຖານ, ການເກັບກູ້ລະເບີດທີ່ບໍ່ທັນແຕກ. ທ່ານ ທອງສະຫວັນ ພົມວິຫານ ໄດ້ຢືນຢັນການສະໜັບສະໜູນ ທ່ານທູດທັງສອງ ຕະຫຼອດໄລຍະການປະຕິບັດໜ້າທີ່ຢູ່ ສປປ ລາວ ເພື່ອປະກອບສ່ວນສໍາຄັນເຂົ້າໃນການເສີມຂະຫຍາຍສາຍພົວພັນຮ່ວມມືອັນດີງາມ ກໍຄື ເພີ່ມທະວີຄວາມເຂົ້າອົກເຂົ້າໃຈ ແລະ ນໍາເອົາຜົນປະໂຫຍດຕົວຈິງມາສູ່ປະຊາຊົນສອງຊາດ ລາວ-ອາເມລິກາ ແລະ ລາວ-ອິດສະຕາລີ ໃຫ້ນັບມື້ຫຼາຍຂຶ້ນກວ່າເກົ່າ, ເພື່ອສັນຕິພາບ, ມິດຕະພາບ ແລະ ການຮ່ວມມືພັດທະນາໃນພາກພື້ນ ແລະ ສາກົນ.

## 5. ຄະນະພົວພັນຕ່າງປະເທດສູນກາງພັກ ຈັດກອງປະຊຸມສະຫຼຸບການເຄື່ອນໄຫວຕ່າງປະເທດ ຂອງບັນດາອົງການຈັດຕັ້ງ ແລະ ມະຫາຊົນຂັ້ນສູນກາງ ແລະ ການທູດປະຊາຊົນ ຂອງພັກ ປະຈໍາ 06 ເດືອນຕົ້ນປີ 2021




ວັນທີ 29 ກໍລະກົດ 2021, ຄະນະພົວພັນຕ່າງປະເທດສູນກາງພັກ ໄດ້ຈັດກອງປະຊຸມສະຫຼຸບຖອດຖອນ ບົດຮຽນການເຄື່ອນໄຫວວຽກງານຕ່າງປະເທດຂອງບັນດາອົງການພັກຂັ້ນສູນກາງ, ສູນກາງແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າແຫ່ງ

ຊາດລາວ, ບັນດາອົງການຈັດຕັ້ງມະຫາຊົນຂັ້ນສູນກາງ, ບັນດາສະມາຄົມມິດຕະພາບ ແລະ ຄະນະສັນຕິພາບ ແລະ ສາມັກຄີຂອງລາວກັບຕ່າງປະເທດ ປະຈຳ 06 ເດືອນຕົ້ນປີ 2021 ແລະ ວາງທິດທາງແຜນການ 6 ເດືອນ ທ້າຍປີ 2021 ໂດຍການເປັນ ປະທານຂອງ ສະຫາຍ ທອງສະຫວັນ ພົມວິຫານ, ກຳມະການສູນກາງພັກ, ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ແລະ ມີຕາງໜ້າບັນດາຄະນະນຳ, ຄະນະກົມ ແລະ ພະນັກງານທີ່ກ່ຽວຂ້ອງຈາກ ອົງການຈັດຕັ້ງຕ່າງໆ ເຂົ້າຮ່ວມຈຳນວນ 48 ສະຫາຍ. ໃນກອງປະຊຸມ ສະຫາຍ ສົມດີ ບຸນຄຸ້ມ, ກຳມະການຄະນະພັກ, ຮອງຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ໄດ້ຂຶ້ນຜ່ານບົດສະຫຼຸບສັງລວມ ກ່ຽວກັບການເຄື່ອນໄຫວວຽກງານການຕ່າງປະເທດຂອງພັກ ແລະ ການທູດປະຊາຊົນ ໃນໄລຍະ 06 ເດືອນຕົ້ນປີ 2021, ທ່າມກາງສະພາບການຢູ່ພາກພື້ນ ແລະ ສາກົນ ຍັງສືບຕໍ່ມີການປ່ຽນແປງຢ່າງໄວວາ ແລະ ສັບສົນ, ເຊິ່ງໄດ້ປຶກສາຫາລືກ່ຽວກັບການຈັດຕັ້ງປະຕິບັດແຜນງົບປະມານ ເພື່ອເຮັດໃຫ້ການເຄື່ອນໄຫວວຽກງານຕ່າງປະເທດ ມີປະສິດທິຜົນ ດ້ວຍຮູບການຈັດກອງປະຊຸມຜ່ານລະບົບວີດີໂອທາງໄກ ທັງເປັນການປະຢັດງົບປະມານ ແຕ່ຍັງສາມາດສືບຕໍ່ເຄື່ອນໄຫວວຽກງານຕ່າງປະເທດຂອງພັກ ກໍ່ຄືການທູດປະຊາຊົນ ຜ່ານຫຼາຍຮູບແບບ.

ໃນໂອກາດດັ່ງກ່າວ, ສະຫາຍ ທອງສະຫວັນ ພົມວິຫານ, ກຳມະການສູນກາງພັກ, ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ໄດ້ໂອ້ລົມຕໍ່ກອງປະຊຸມ ໂດຍໄດ້ສະແດງຄວາມຊົມເຊີຍ ແລະ ຕີລາຄາສູງຕໍ່ຜົນງານ, ຜົນສຳເລັດຂອງການເຄື່ອນໄຫວການຕ່າງປະເທດຂອງພັກ ແລະ ການທູດປະຊາຊົນ ຂອງພັກ ທີ່ຍາດມາໄດ້ໃນໄລຍະຜ່ານມາ ກໍ່ຄືທິດທາງແຜນການເຄື່ອນໄຫວຕ່າງປະເທດໃນຕໍ່ໜ້າ, ໂດຍເນັ້ນເຖິງຄວາມຈຳເປັນໃນການເປີດກວ້າງການພົວພັນກັບຕ່າງປະເທດ, ຍາດແຍ່ງຂົນຂວາຍການຮ່ວມມື, ການສະໜັບສະໜູນ ແລະ ຊ່ວຍເຫຼືອ ສປປ ລາວ. ພ້ອມທັງເປັນການໂຄສະນາແນວທາງການຕ່າງປະເທດ ສັນຕິພາບ, ເອກະລາດ, ມິດຕະພາບ ແລະ ການຮ່ວມມືຢ່າງສະເໝີຕົ້ນສະເໝີປາຍ ໂດຍສະເພາະແມ່ນຜັນຂະຫຍາຍເນື້ອໃນມະຕິຂອງ ກອງປະຊຸມໃຫຍ່ສະໄໝ XI ຂອງ ພັກ ເພື່ອປະກອບສ່ວນເຂົ້າໃນການສ້າງສະພາບແວດລ້ອມສາກົນທີ່ອຳນວຍແກ່ການປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ, ສືບຕໍ່ຍົກສູງຖານະບົດບາດຂອງພັກ, ລັດເຮົາໃນເວທີພາກພື້ນ ແລະ ສາກົນ.

## 6. ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ປາຖະກະຖາວັນສ້າງຕັ້ງພັກກອມມູນິດຈີນ ຄົບຮອບ 100 ປີ ທີ່ ກະຊວງເຕັກໂນໂລຊີ ແລະ ການສື່ສານ





ວັນທີ 28 ກໍລະກົດ 2021, ກະຊວງເຕັກໂນໂລຊີ ແລະ ການສື່ສານ ໄດ້ຈັດພິທີປາຖະກະຖາ ວັນສ້າງຕັ້ງພັກກອມມູນິດຈີນ ຄົບຮອບ 100 ປີ ( 01/07/1921 - 01/07/2021 ) ໂດຍການໃຫ້ກຽດປາຖະກະຖາ ຂອງ ສະຫາຍ ທອງສະຫວັນ ພົມວິຫານ ກຳມະການສູນກາງພັກ, ເລຂາຄະນະພັກ, ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ, ໂດຍການເຂົ້າຮ່ວມຂອງຄະນະພັກ

ກະຊວງ, ຄະນະພັກຮາກຖານ, ຄະນະໜ່ວຍພັກ, ສະມາຊິກພັກ ແລະ ພະນັກງານຫຼັກແຫຼ່ງ ອ້ອມຂ້າງກະຊວງດັ່ງກ່າວ. ສະຫາຍ ທອງສະຫວັນ ພົມວິຫານ ໄດ້ທວນຄືນເຖິງປະຫວັດສາດ ແຫ່ງການສ້າງຕັ້ງພັກກອມມູນິດຈີນ, ຍົກໃຫ້ເຫັນມູນເຊື້ອ ແລະ ວິລະກຳ ອັນສະຫງ່າອົງອາດ ຂອງພັກກອມມູນິດຈີນ ໃນການນຳພາ - ຊີ້ນຳປະຊາຊົນຈີນ ບູລະນະສ້າງສາລະບອບສັງຄົມນິຍົມທີ່ມີສີສັນ ພິເສດຂອງຈີນ ຈຶ່ງສາມາດເຮັດສຳເລັດພາລະກິດອັນຍິ່ງໃຫຍ່ຂອງພັກ, ຂອງຊາດ, ເພື່ອປະກາດຄວາມເປັນເອກະລາດ ແລະ ສະຖາປະນາເປັນ ປະເທດ ສາທາລະນະລັດ ປະຊາຊົນຈີນ ໃນວັນທີ 01 ຕຸລາ 1949 ຢ່າງສະຫງ່າຜ່າເຜີຍ ພາຍໃຕ້ການນຳພາ - ຊີ້ນຳ ຂອງ ພັກກອມມູນິດຈີນ. ພ້ອມກັນນັ້ນ, ສະຫາຍ ທອງສະຫວັນ ພົມວິຫານ ຍັງໄດ້ຍົກໃຫ້ເຫັນມູນເຊື້ອການພົວພັນຮ່ວມມື ລະຫວ່າງ ສອງພັກ, ສອງລັດ ແລະ ປະຊາຊົນສອງຊາດ ລາວ-ຈີນ ທີ່ເປັນຄູ່ຮ່ວມຍຸດທະສາດຮອບດ້ານ ໝັ້ນຄົງຍາວນານ ຕາມທິດ 4 ດີ ບົນພື້ນຖານຄູ່ຮ່ວມຊາຕາກຳ ລາວ - ຈີນ.

## IV. ການເຄື່ອນໄຫວວຽກງານ ຂອງອົງການຈັດຕັ້ງມະຫາຊົນ

### 1. ພິທີເລົ່າມູນເຊື້ອວັນສ້າງຕັ້ງອົງການສະຫະພັນແມ່ຍິງລາວ ຄົບຮອບ 66 ປີ




ວັນທີ 22 ກໍລະກົດ 2021, ສະຫະພັນແມ່ຍິງ ຄະນະພົວພັນຕ່າງປະເທດສູນກາງພັກ ໄດ້ຈັດພິທີປາຖະກະຖາເລົ່າມູນເຊື້ອ ເພື່ອສະເຫຼີມສະຫຼອງວັນສ້າງຕັ້ງອົງການສະຫະພັນແມ່ຍິງລາວ ຄົບຮອບ 66 ປີ (20/07/1955-20/07/2021), ເປັນກຽດເຂົ້າຮ່ວມ ໂດຍ ສະຫາຍ ທອງສະຫວັນ ພົມວິຫານ, ກຳມະການສູນກາງພັກ, ເລຂາຄະນະບໍລິຫານງານພັກ, ຫົວໜ້າຄະນະພົວພັນຕ່າງປະເທດ ສູນກາງພັກ ແລະ ມີບັນດາສະຫາຍໃນຄະນະສະຫະພັນແມ່ຍິງຄະນະພົວພັນຕ່າງປະເທດສູນກາງພັກ, ຕາງໜ້າສະຫະພັນກຳມະບານ, ຕາງໜ້າຄະນະບໍລິຫານງານຊາວໜຸ່ມ ແລະ ສະມາຊິກແມ່ຍິງ ພາຍໃນຄະນະພົວພັນຕ່າງປະເທດສູນກາງພັກເຂົ້າຮ່ວມຢ່າງ ພ້ອມພຽງ.

ສະຫາຍ ນາງ ສີຣິພອນ ຄູຫາເທບ, ປະທານສະຫະພັນແມ່ຍິງ ຄະນະພົວພັນຕ່າງປະເທດສູນກາງພັກ ໄດ້ເລົ່າຄືນປະຫວັດ ຄວາມເປັນມາ ຂອງການສ້າງຕັ້ງ ແລະ ການເຕີບໃຫຍ່ຂະຫຍາຍຕົວ ຂອງອົງການສະຫະພັນແມ່ຍິງລາວ, ຍົກໃຫ້ເຫັນຜົນຂອງກອງ ປະຊຸມໃຫຍ່ຂອງແມ່ຍິງລາວທົ່ວປະເທດ ທັງ 7 ຄັ້ງ ແລະ ຜົນງານການເຄື່ອນໄຫວພົ້ນເດັ່ນຂອງສະຫະພັນແມ່ຍິງລາວ, ເຊິ່ງໄດ້ເຮັດ ໃຫ້ສະມາຊິກແມ່ຍິງ ພາຍໃນຄະນະພົວພັນຕ່າງປະເທດສູນກາງພັກ ໄດ້ຮັບຮູ້ ແລະ ເຂົ້າໃຈແຈ້ງຕື່ມ, ເພື່ອນຳເອົາມູນເຊື້ອອັນດີງາມ ຂອງແມ່ຍິງຮຸ່ນກ່ອນ ມາຈັດຕັ້ງຜັນຂະຫຍາຍ ໃຫ້ໄດ້ຮັບໝາກຜົນຫຼາຍກວ່າເກົ່າ.

ໃນໂອກາດດັ່ງກ່າວ, ສະຫາຍ ທອງສະຫວັນ ພົມວິຫານ, ກຳມະການສູນກາງພັກ, ເລຂາຄະນະພັກ, ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ໄດ້ສະແດງຄວາມຍ້ອງຍໍຊົມເຊີຍ ຕໍ່ການເຄື່ອນໄຫວຢ່າງຫ້າວຫັນ ຂອງແມ່ຍິງຄະນະພົວພັນຕ່າງປະເທດ ໃນໄລຍະຜ່ານມາ ແລະ ໃຫ້ທິດຊີ້ນຳ ໃນການເຄື່ອນໄຫວໃນຕໍ່ໜ້າ. ໃນໂອກາດດຽວກັນນັ້ນ, ທ່ານ ນາງ ວາດສະໜາ ພົມວິຫານ, ໃນນາມພັນລະຍາການນຳ ໄດ້ມອບຜ້າປິດປາກ ຈຳນວນໜຶ່ງ ໃຫ້ແກ່ສະຫະພັນແມ່ຍິງ ຄະນະພົວພັນຕ່າງປະເທດສູນກາງພັກ.

## 2. ສະຫະພັນກຳມະບານ ຄຕພ ມອບເງິນຊ່ວຍເຫຼືອ ໃຫ້ຜູ້ປະສົບກັບໄພນ້ຳຖ້ວມ ຢູ່ແຂວງໄຊຍະບູລີ



ໃນວັນທີ 23 ກໍລະກົດ 2021, ສະຫາຍ ເກົລິ ຢາງກໍ, ປະທານສະຫະພັນກຳມະບານ ຄະນະພົວພັນຕ່າງປະເທດສູນກາງພັກ ພ້ອມດ້ວຍຄະນະ ໄດ້ໄປມອບເງິນຊ່ວຍເຫຼືອ ຈຳນວນ 5,000,000 ກີບ ຜ່ານ ສູນກາງສະຫະພັນກຳມະບານລາວ ເພື່ອຊ່ວຍບັນເທົາທຸກ ແກ່ຜູ້ປະສົບກັບໄພນ້ຳຖ້ວມ ຢູ່ແຂວງໄຊຍະບູລີ. ສະຫາຍ ວິໄລ ວົງຂະເສີມ, ຮອງປະທານສູນກາງສະຫະພັນກຳມະບານລາວ ທີ່ຕາງໜ້າຮັບເງິນຊ່ວຍເຫຼືອໃນຄັ້ງນີ້ ໄດ້ສະແດງຄວາມຊົມເຊີຍ ແລະ ຂອບໃຈ ຕໍ່ການປະກອບສ່ວນ ຂອງສະຫະພັນກຳມະບານຄະນະພົວພັນຕ່າງປະເທດສູນກາງພັກ ໃນຄັ້ງນີ້ ແລະ ຈະນຳເອົາຈຳນວນເງິນດັ່ງກ່າວ ໄປມອບໃຫ້ຜູ້ໄດ້ຮັບຜົນກະທົບ ຕໍ່ໄປ.